ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-30 ເມສາ 2026
ປີທີ 15
ສະບັບທີ 1063
ລາຍສັປະດາ

## ຜົນກອງປະຊຸມສະໄໝສາມັນຂອງລັດຖະບານ ປະຈຳເດືອນເມສາ



(ສພຊ) - ຕອນແລງວັນທີ 28 ເມສານີ້ ທີ່ສຳນັກງານນາຍົກລັດຖະມົນຕີ, ທ່ານ ຄຳຜາ ພົມມະສອນ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ(ຫສນຍ) ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນກອງປະຊຸມສະໄໝສາມັນຂອງລັດຖະບານ ປະຈຳເດືອນເມສາ 2026 ເຊິ່ງໃຫ້ຮູ້ວ່າ: ກອງປະຊຸມດັ່ງກ່າວ ໄດ້ເປີດຂຶ້ນໃນຕອນເຊົ້າວັນທີ 27 ແລະ ປິດລົງໃນຕອນແລງວັນທີ 28 ເມສານີ້ ທີ່ສຳນັກງານນາຍົກລັດຖະມົນຕີ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ; ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ປະທານຄະນະກຳມະການປົກ

ອ່ານຕໍ່ໜ້າ 3



ແນວຄິດປະທານ
### ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ໜ້າທີ່ຕົ້ນຕໍ ແລະ ໜັກໜ່ວງຂອງສະພາປະຊາຊົນສູງສຸດຊຸດທີ II ແມ່ນການສ້າງລັດຖະທຳມະນູນ ແລະ ກົດໝາຍ, ລັດຖະທຳມະນູນ ເປັນກົດໝາຍພື້ນຖານແຫ່ງລັດ ທີ່ຫັນແນວທາງຂອງພັກເປັນອັນລະອຽດ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 202-203)

ລັກສະນະຊົນຊັ້ນຂອງລັດເຮົາ ສະແດງອອກຢ່າງລວມສູນຢູ່ບ່ອນວ່າພັກປະຊາຊົນປະຕິວັດລາວເປັນຜູ້ນຳພາ; ທຸກການເຄື່ອນໄຫວຂອງລັດ ແມ່ນແນໃສ່ປະຕິບັດແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍຕ່າງໆຂອງພັກ ໃຫ້ປາກົດຜົນເປັນຈິງ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 447-448)

ລັກສະນະຊົນຊັ້ນຂອງລັດເຮົາ ສະແດງອອກຢູ່ບ່ອນວ່າແມ່ນລັດເອກະພາບຂອງປະຊາຊົນບັນດາເຜົ່າໃນວົງຄະນາຍາດແຫ່ງຊາດລາວ, ປະຕິບັດຄວາມສະເໝີພາບລະຫວ່າງເຜົ່າຕ່າງໆຢ່າງເຖິງທອງ, ນຳເອົາຄວາມຢູ່ດີກິນດີມາສູ່ປະຊາຊົນແລະຄວາມຈະເລີນກ້າວໜ້າມາສູ່ປະເທດຊາດ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 448)

ອ່ານຕໍ່ສະບັບໜ້າ

## ສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງ ສພຂ ສະຫວັນນະເຂດ



(ສພຊ) - ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ V ໄດ້ໄຂຂຶ້ນຢ່າງເປັນທາງການໃນວັນທີ 22 ເມສາ ແລະ ອັດລົງດ້ວຍຜົນສຳເລັດຢ່າງຈົບງາມໃນວັນທີ 24 ເມສາ 2026 ລວມ 3 ວັນເຕັມ ທີ່ຫໍວັດທະນະທຳໄກສອນ ພົມວິຫານ ໂດຍການເປັນປະທານຂອງທ່ານ ບຸນໂຈມ ອຸບົນປະເສີດ ກຳມະການສູນກາງພັກ, ປະທານສະພາປະຊາຊົນແຂວງສະຫວັນນະເຂດ, ເຂົ້າຮ່ວມມີທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ບັນດາທ່ານຮອງປະທານ ແລະ ກຳມະການຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ), ສະມາຊິກ

ອ່ານຕໍ່ໜ້າ 4

## ມອບເງິນຊ່ວຍເຫຼືອ 3 ເມືອງແຂວງສະຫວັນນະເຂດ




ອ່ານຕໍ່ໜ້າ 4

## ເຜີຍແຜ່ນິຕິກຳ ແລະ ປຶ້ມຄູ່ມືການພົບປະປະຊາຊົນ

(ສພຊ) - ກອງປະຊຸມເຜີຍແຜ່ນິຕິກຳຂອງຄະນະປະຈຳສະພາແຫ່ງຊາດ ແລະ ປຶ້ມຄູ່ມືການພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໄດ້ຈັດຂຶ້ນໃນວັນທີ 23-24 ເມສາ 2026 ທີ່ເມືອງນານ ແຂວງຫຼວງພະບາງ ໂດຍການເປັນປະ

ອ່ານຕໍ່ໜ້າ 8



## ກອງປະຊຸມຄະນະກຳມະການ ປະສານງານ WAIPA ຄັ້ງທີ 5




ອ່ານຕໍ່ໜ້າ 8

## ຕິດຕາມການນຳໃຊ້ງົບປະມານເລືອກຕັ້ງ



ອ່ານຕໍ່ໜ້າ 5



ສານອາຫານ... (ໜ້າ 6)



ສະພານິຕິບັນຍັດ... (ໜ້າ 7)




ບັນຫາທີ່ບໍ່ຄາດຄິດ... (ໜ້າ 8)

# ມອບ-ຮັບໜ້າທີ່ປະທານ ສພຂ ວຽງຈັນ




(ສພຂ)-ພິທີມອບ-ຮັບໜ້າທີ່ ປະທານສະພາປະຊາຊົນແຂວງວຽງຈັນ ລະຫວ່າງ ທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ (ຜູ້ເກົ່າ) ແລະ ທ່ານ ພູທະນູເພັດ ໄຊສົມບັດ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງວຽງຈັນ (ຜູ້ໃໝ່) ໄດ້ຈັດຂຶ້ນໃນວັນທີ 30 ເມສາ 2026 ທີ່ສະໂມສອນແຂວງ ໂດຍມີບັນດາຄະນະກຳມະການປະຈຳພັກແຂວງ, ກຳມະການພັກແຂວງ, ຫົວໜ້າ, ຮອງຫົວໜ້າພະແນກການ, ກົມກອງ ແລະ ພະນັກງານຂອງພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພິຍານ.

ທ່ານ ບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ຊຸດທີ IV ໄດ້ລາຍງານຫຍໍ້ຜົນງານການເຄື່ອນໄຫວທີ່ພົ້ນເດັ່ນໃນໄລຍະຜ່ານມາ ຈາກນັ້ນໄດ້ເຊັນບົດບັນທຶກ ແລະ ມອບ-ຮັບ ໜ້າທີ່ ປະທານສະພາປະຊາຊົນແຂວງວຽງຈັນ ລະຫວ່າງ ຜູ້ເກົ່າ ແລະ ໃໝ່ ຢ່າງເປັນທາງການ.




# ພົບປະແລກປ່ຽນບົດຮຽນລະຫວ່າງ ສພຂ ກັບ ໂຮງຮຽນທິດສະດີການເມືອງ-ການປົກຄອງ




(ສພຂ) - ວັນທີ 30 ເມສາ ຜ່ານມານີ້, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ຈັດກອງປະຊຸມພົບປະແລກປ່ຽນບົດຮຽນລະຫວ່າງ ສະພາປະຊາຊົນແຂວງ (ສພຂ) ກັບ ໂຮງຮຽນທິດສະດີການເມືອງ-ການປົກຄອງແຂວງບໍ່ແກ້ວ ໂດຍພາຍໃຕ້ການເປັນປະທານຮ່ວມຂອງທ່ານ ຄຳຈັນ ອິນທະຈັກ ກຳມະການພັກແຂວງ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ທົມມະກອນ ສະຕິ ຮອງຫົວໜ້າໂຮງຮຽນທິດສະດີການເມືອງ-ການປົກຄອງແຂວງບໍ່ແກ້ວ ເຂົ້າຮ່ວມມີບັນດາຄະນະປະຈຳສະພາ, ຫົວໜ້າ-ຮອງຫ້ອງວ່າການສະພາ, ຫົວໜ້າ-ຮອງຂະແໜງຕະຫຼອດຮອດພະນັກງານວິຊາການ, ຄູ-ອາຈານ, ນັກສຶກໂຮງຮຽນທິດສະດີການເມືອງ-ການປົກຄອງເຂົ້າຮ່ວມ.

ທ່ານ ອາຈານ ອຸ່ນຄຳ ສອນເລົ່າ ໄດ້ຂຶ້ນກ່າວຈຸດປະສົງຂອງການລົງມາພົບປະແລກປ່ຽນຄັ້ງນີ້ ພ້ອມທັງລາຍງານຫົວຂໍ້ການແລກປ່ຽນບົດຮຽນໃນກຸ່ມວິຊາຄຸ້ມຄອງບໍລິຫານລັດ ຄື: 1). ການປະຕິບັດພາລະບົດບາດ ໃນການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າຢູ່ແຂວງ ບໍ່ແກ້ວ; 2). ໃນການຕິດຕາມກວດກາ ຂອງສະພາປະຊາຊົນແຂວງ ຕໍ່ກັບອົງການບໍລິຫານລັດແລະອົງການຕຸລາການ.

ຫຼັງຈາກນັ້ນ, ກອງປະຊຸມ ໄດ້ມີຄຳຖາມເຈາະຈົ້ມແລກປ່ຽນຕໍ່ກັບສອງຫົວຂໍ້ນັ້ນກໍຄືສິດ, ພາລະບົດບາດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງ ໂອກາດນີ້ທາງຄະນະປະຈຳສະພາພ້ອມທັງພະນັກງານ-ລັດຖະກອນກໍໄດ້ຂຶ້ນຊີ້ແຈງ ແລະມີຄຳເຫັນຕໍ່ກັບຄຳຖາມເຈາະນີ້ມີດັ່ງກ່າວຢ່າງກົງໄປກົງມາດ້ວຍບັນຍາກາດອັນຟົດຟື້ນ ແລະ ມີລັກສະນະເປັນກັນເອງ.



# ມອບ-ຮັບເຄື່ອງໃຫ້ ສພຂ ຫົວພັນ




(ສພຂ) - ວັນທີ 4 ພຶດສະພາ, ທ່ານ ພັນສາ ສຸວັນນະລາດ ຜູ້ອຳນວຍການ ບໍລິສັດແສງວິໄລ ມາຍນິ່ງສາກົນ ຈຳກັດ ພ້ອມຄະນະ ນຳເອົາເສື້ອໂປໂລ ຈຳນວນ 120 ຜືນ ລວມມູນຄ່າທັງໝົດ 25.000.000 ມອບໃຫ້ສະພາປະຊາຊົນແຂວງ ເພື່ອນຳໃຊ້ເຂົ້າໃນກິດຈະກຳຂະບວນການຕ່າງໆ ໂດຍການກ່າວຮັບຂອງທ່ານ ຮຸ່ງອາລຸນ ບຸນທະເມືອງ ກຳມະການພັກແຂວງ ຮອງປະທານສະພາປະຊາຊົນແຂວງ. ຈາກນັ້ນ ທ່ານ ຮຸ່ງອາລຸນ ບຸນທະເມືອງ ຕາງໜ້າສະພາປະຊາຊົນແຂວງ ໄດ້ສະແດງຄວາມຂອບໃຈ ມາຍັງບໍລິສັດດັ່ງກ່າວ ທີ່ໃຫ້ການອຸປະຖຳໃນຄັ້ງນີ້ ຂໍໃຫ້ກິດຈະການ ແລະ ການດຳເນີນງານຕ່າງໆຈະເລີນກ້າວໜ້າຂຶ້ນເລື້ອຍໆ.

ແລະ ໃນວັນທີ 11 ພຶດສະພານີ້, ຢູ່ທີ່ສະພາປະຊາຊົນແຂວງຫົວພັນ ໄດ້ມີພິທີມອບ-ຮັບ ເຄື່ອງໃຊ້ຫ້ອງການ ຈາກບໍລິສັດ PSL Group Lak, ບໍລິສັດກຸ່ມບຸນທະວີຊັບຈຳກັດແລະບໍລິສັດ ແສງທອງກໍ່ສ້າງເຄຫາສະຖານ ຂົວທາງ ແລະ ຊົນລະປະທານນຳເອົາເຄື່ອງອຸປະກອນຮັບໃຊ້ຫ້ອງການ ໃຫ້ແກ່ 53 ຕາແສງທົ່ວແຂວງຫົວພັນໂດຍຕາງໜ້າກ່າວມອບ ຂອງທ່ານ ອົງຄານສະດາ ມ່ວງຄຳ ຮອງປະທານບໍລິສັດ PSL Group Lak ແລະ ຕາງໜ້າກ່າວຮັບຂອງທ່ານ ພອນສຸກ ອິນທະວົງ ປະທານຄະນະກຳມະການປົກຄອງແຂວງຫົວພັນ.

ຈຸດປະສົງໃນການມອບເຄື່ອງຮັບໃຊ້ຫ້ອງການໃນຄັ້ງນີ້, ເພື່ອເປັນການຊຸກຍູ້ປະກອບສ່ວນເຂົ້າໃນການປະຕິບັດໜ້າທີ່ຮັບໃຊ້ເຂົ້າໃນວຽກງານໃຫ້ພະນັກງານ ຂັ້ນຕາແສງໃຫ້ມີປະສິດທິພາບ ແລະ ສະດວກໃນການເຮັດວຽກງານຕ່າງໆ.

ໂອກາດນີ້, ທ່ານປະທານຄະນະກຳມະການປົກຄອງແຂວງ ສະແດງຄວາມຂອບໃຈ ມາຍັງທ່ານຮອງປະທານບໍລິສັດພ້ອມດ້ວຍຄະນະນຳບໍສັດ ທີ່ໄດ້ນຳເອົາເຄື່ອງອຸປະກອນສິ່ງຂອງຈຳເປັນມາປະກອບສ່ວນອຸປະຖຳຊຸກຍູ້ ແລະ ຈະນຳເອົາອຸປະກອນເຫຼົ່ານີ້ໄປມອບໃຫ້ແຕ່ລະເມືອງມອບຕໍ່ໃຫ້ແຕ່ລະຕາແສງ, ພ້ອມທັງອວຍພອນໃຫ້ບັນດາທ່ານ ແລະ ບໍລິສັດ ຈົ່ງມີສຸຂະພາບເຂັ້ມແຂງ, ໃຫ້ທຸລະກິດ, ກິດຈະການຕ່າງໆມີຄວາມຈະເລີນຮຸ່ງເຮືອງ ກ້າວໜ້າ ແລະ ປະສົບແຕ່ຜົນສຳເລັດຍິ່ງໃຫຍ່ກວ່າເກົ່າຂຶ້ນເລື້ອຍໆ.

ສຳລັບເຄື່ອງທີ່ນຳມາມອບໃນຄັ້ງນີ້, ປະກອບດ້ວຍ: ຄອມພິວເຕີ ຈຳນວນ 106 ໜ່ວຍ, ເຄື່ອງປິນເຕີຈຳນວນ 53 ໜ່ວຍ ພ້ອມອຸປະກອນຄົບຊຸດ, ລວມມູນຄ່າທັງໝົດ 1.200.000.000 ກີບ. ໃນນີ້, ບໍລິສັດ PSL Group 1.000.000.000 ກີບ; ບໍລິສັດ ກຸ່ມບຸນທະວີຊັບຈຳກັດ 100.000.000 ກີບ ແລະ ບໍລິສັດ ແສງທອງກໍ່ສ້າງ ເຄຫາສະຖານຂົວທາງ ແລະ ຊົນລະປະທານ 100.000.000 ກີບ.



## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ຄອງນະຄອນຫຼວງວຽງຈັນ ເຂົ້າຮ່ວມແບບເຊິ່ງໜ້າ ແລະ ເຂົ້າຮ່ວມຜ່ານລະບົບກອງປະຊຸມທາງໄກຂອງປະທານ, ຮອງປະທານຄະນະກຳມະການປົກຄອງບັນດາແຂວງ. ທັງນີ້, ກໍເພື່ອຮັບຟັງແລະປະກອບຄຳເຫັນຕໍ່ການລາຍງານສະພາບພົ້ນເດັ່ນປະຈຳເດືອນເມສາແລະທິດທາງແຜນວຽກຈຸດສຸມປະຈຳເດືອນພຶດສະພາ 2026.

ກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ພິຈາລະນາຕໍ່ບັນດາຫົວຂໍ້ ໃນ 2 ວາລະສຳຄັນ ຄື:

ວາລະທີ 1: ລາຍງານສະພາບພົ້ນເດັ່ນ ແລະ ວຽກງານຈຸດສຸມຮີບດ່ວນຈຳນວນໜຶ່ງຄື: 1) ວຽກງານພົ້ນເດັ່ນປະຈຳເດືອນເມສາແລະທິດທາງແຜນການປະຈຳເດືອນພຶດສະພາ 2026 ຂອງລັດຖະບານ; 2) ສະພາບພົ້ນເດັ່ນພາກພື້ນ ແລະ ສາກົນ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ລວມທັງສະພາບອຸບັດເຫດ, ອັກຄີໄພ ແລະ ບັນດາປາກົດການຫຍໍ້ທໍ້ໃນໄລຍະບຸນປີໃໝ່ລາວ; 3) ຄວາມຄືບໜ້າໃນການປັບປຸງສ້ອມແປງເສັ້ນທາງໃນທົ່ວປະເທດ; 4) ການແກ້ໄຂຜົນກະທົບຈາກພະຍຸໝາກເຫັບ; 5) ການກະກຽມຕ້ານໄພແຫ້ງແລ້ງ, ສະພາບໄຟໄໝ້ປ່າ, ການຖາງປ່າ-ຈູດປ່າ, ການແກ້ໄຂບັນຫາໝອກຄວັນ (PM 2.5) ພ້ອມທັງສະເໜີມາດຕະການແກ້ໄຂ; 6) ການປະຕິບັດຄຳສັ່ງ 40/ນຍ ວ່າດ້ວຍການແກ້ໄຂບັນຫານ້ຳມັນແລະຫັນວິກິດເປັນໂອກາດເພື່ອນຳໃຊ້ລົດໄຟຟ້າ ແລະ ພະລັງງານທົດແທນ, ການແກ້ໄຂບັນຫາການລັກລອບຂຸດຄົ້ນແຮ່ທາດແລະທິດທາງການຄຸ້ມຄອງການພັດທະນາແຮ່ທາດໃນຕໍ່ໜ້າ ບົນພື້ນຖານການກວດກາ ແລະ ປະເມີນໂຄງການທີ່ໄດ້ອະນຸມັດຜ່ານມາ; 7) ສະພາບອັດຕາແລກປ່ຽນ, ເງິນເຟີ້ ແລະ ມາດຕະການແກ້ໄຂ. ໃນນັ້ນ:

ຕໍ່ການສະຫຼຸບວຽກງານພົ້ນເດັ່ນປະຈຳເດືອນເມສາ 2026: ກອງປະຊຸມໄດ້ຕີລາຄາເຖິງວ່າສະພາບການພາກພື້ນ ແລະ ສາກົນ ຍັງສືບຕໍ່ເຄັ່ງຮ້ອນ, ສັບສົນແລະຄາດຄະເນໄດ້ຍາກ ໂດຍສະເພາະບັນຫາຂໍ້ຂັດແຍ່ງຢູ່ເຂດຕາເວັນອອກກາງ ແລະ ເຂດອື່ນໆ ເຊິ່ງໄດ້ສົ່ງຜົນເຮັດໃຫ້ສະພາບເສດຖະກິດໂລກທີ່ມີຄວາມຫຍຸ້ງຍາກຢູ່ແລ້ວນັ້ນຍິ່ງສືບຕໍ່ມີຜົນກະທົບເປັນວົງກວ້າງຕື່ມ ລວມເຖິງຢູ່ປະເທດລາວເຮົາ ໂດຍສະເພາະລາຄາສິນຄ້າ, ການຜະລິດ, ການຂົນສົ່ງ ແລະ ອື່ນໆ; ແຕ່ລັດຖະບານ ກໍໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາມາດຕະການ ແລະ ວຽກຈຸດສຸມທີ່ກຳນົດໄວ້ ມີຜົນສຳເລັດຫຼາຍດ້ານ ເປັນຕົ້ນ: ທົ່ວປະເທດສືບຕໍ່ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ສາມາດຈັດເກັບລາຍຮັບເຂົ້າງົບປະມານໄດ້ 27 ພັນຕື້ກວ່າກີບ ເທົ່າກັບ 33% ຂອງແຜນປີ, ການປະຕິບັດແຜນລາຍຈ່າຍ ໄດ້ 11 ພັນຕື້ກວ່າກີບ ເທົ່າກັບ 14% ຂອງແຜນການປີ, ການຄວບຄຸມອັດຕາເງິນເຟີ້ຢູ່ໃນລະດັບ 9.7%, ສາມາດສະສົມຄັງສຳຮອງເງິນຕາຕ່າງປະເທດ ກຸ້ມການນຳເຂົ້າ 5.2 ເດືອນ, ສາມາດຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ໄດ້ຕາມຂໍ້ຜູກພັນສັນຍາ; ໄດ້ສຸມໃສ່ປະຕິບັດມາດຕະການດ້ານການຄ້າ ໂດຍສະເພາະການຄຸ້ມຄອງລາຄາສິນຄ້າ, ຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກສິນຄ້າ; ໄດ້ເອົາໃຈໃສ່ຕິດຕາມ, ກວດກາລາຄາສິນຄ້າໃນທ້ອງຕະຫຼາດ ໂດຍສະເພາະສິນຄ້າຮັບໃຊ້ຊີວິດການເປັນຢູ່ປະຈຳວັນໃນໄລຍະບຸນປີໃໝ່ລາວ ເຊິ່ງໂດຍລວມແມ່ນບໍ່ມີສະພາບກັກຕຸນ ແລະ ສວຍໂອກາດຂຶ້ນລາຄາ; ໄດ້ສຸມໃສ່ແກ້ໄຂບັນຫານ້ຳມັນເຊື້ອໄຟເຮັດໃຫ້ ການສະໜອງກັບສູ່ສະພາບເປັນປົກກະຕິ, ມີຄວາມສະຫງົບ ແລະ ພຽງພໍຕໍ່ຄວາມຕ້ອງການຊົມໃຊ້ຂອງສັງຄົມ, ສາມາດແກ້ໄຂໄດ້ສະພາບການຕໍ່ຄິວໃສ່ນ້ຳມັນຢູ່ຕາມປໍ້າ; ໄດ້ສຸມໃສ່ການແກ້ໄຂບັນຫາໄຟໄໝ້ລາມປ່າ ແລະ ໝອກຄວັນ (PM 2.5) ເຊິ່ງລັດຖະບານໄດ້ອອກນິຕິກຳ ກໍຄືມາດຕະການເພີ່ມຈຳນວນໜຶ່ງ ເພື່ອແກ້ໄຂບັນຫາທັງໄລຍະສັ້ນ ແລະ ໄລຍະຍາວ ພ້ອມທັງຈັດສຸມກຳລັງລົງແກ້ໄຂຢູ່ພື້ນທີ່ຕົວຈິງເຊິ່ງສາມາດຄວບຄຸມແກ້ໄຂໄດ້ເກືອບທັງໝົດ; ໄດ້ສືບຕໍ່ປັບປຸງ ແລະ ກໍ່ສ້າງໂຄງລ່າງພື້ນຖານໃນຂອບເຂດທົ່ວປະເທດ ໂດຍສະເພາະບັນດາກິດຈະກຳແລະໂຄງການທີ່ເປັນບຸລິມະສິດ ເພື່ອເຊື່ອມຈອດເຊື່ອມໂຍງພາກພື້ນ ແລະ ສາກົນເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ ໄດ້ມີຄວາມຄືບໜ້າເປັນຢ່າງດີ; ໄດ້ສຸມໃສ່ຊຸກຍູ້ບັນດາໂຄງການພະລັງງານ



ໄຟຟ້າສະອາດ ແລະ ພະລັງງານໄຟຟ້າທາງເລືອກ, ຊຸກຍູ້ການພັດທະນາໂຄງການສາຍສົ່ງເຊື່ອມຕໍ່ 500KV ລາວ-ຈີນ ແລະ ສ້າງສາຍສົ່ງ 230KV ເຊື່ອມຕໍ່ກັບພາຍໃນ ເພື່ອຮັບປະກັນການສະໜອງໄຟໃຫ້ພາຍໃນມີຄວາມໝັ້ນຄົງ, ອັນພົ້ນເດັ່ນແມ່ນໄດ້ສຳເລັດ ແລະ ເປີດນຳໃຊ້ໂຄງການສາຍສົ່ງເຊື່ອມຕໍ່ 500KV ລາວ-ຈີນ ຢ່າງເປັນທາງການ; ໄດ້ຍູ້ແຮງການພັດທະນາພື້ນຖານເສດຖະກິດດີຈິຕອນ ໃຫ້ແຂງແຮງເທື່ອລະກ້າວ ໂດຍໄດ້ສືບຕໍ່ເອົາໃຈໃສ່ສ້າງຄວາມຮູ້ພື້ນຖານການຫັນເປັນດີຈິຕອນດ້ວຍຮູບການຕ່າງໆ ທັງໄດ້ນຳໃຊ້ສູນຕ້ານການຫຼອກລວງທາງອອນລາຍ ເຕືອນແລະແຈ້ງໃຫ້ທົ່ວສັງຄົມລະວັງການຕົກເປັນເຫຍື່ອການຫຼອກລວງຜ່ານສື່ສັງຄົມອອນລາຍ; ໄດ້ສຸມໃສ່ການພັດທະນາສີມືແຮງງານຕາມມາດຕະຖານສີມືແຮງງານແຫ່ງຊາດ ຈຳນວນ 44 ສາຂາອາຊີບ ໄດ້ 20 ພັນກວ່າຄົນ; ສາມາດສົ່ງເສີມທຸກພາກສ່ວນເສດຖະກິດ ຈັດຫາວຽກເຮັດງານທຳ ເຂົ້າສູ່ຕະຫຼາດແຮງງານພາຍໃນ ແລະ ໄປເຮັດວຽກຢູ່ຕ່າງປະເທດ ໄດ້ເກືອບ 20 ພັນຄົນ; ຂະຫຍາຍອັດຕາປົກຄຸມປະກັນສັງຄົມໃໝ່ ໄດ້ເກືອບ 5 ພັນຄົນ; ສຳເລັດບັນຊີລາຍຊື່ເພື່ອກະກຽມປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດການປະຕິວັດຊາດປະຊາທິປະໄຕ ໃນງວດ 1 ປີ 2026 ຈຳນວນ 2,600 ກວ່າທ່ານ ເປັນເງິນ 44 ຕື້ກວ່າກີບ; ໄດ້ໃຫ້ຄວາມຊ່ວຍເຫຼືອເຄື່ອງອຸປະໂພກ-ບໍລິໂພກ ແກ່ຜູ້ປະສົບໄພພິບັດທຳມະຊາດຈາກພາຍຸໝາກເຫັບຕົກຢູ່ນະຄອນຫຼວງວຽງຈັນ; ໄດ້ສືບຕໍ່ປະຕິບັດນະໂຍບາຍແກ້ໄຂບັນຫາການຂາດແຄນຄູສອນ ແລະ ການປະລະການຮຽນ ເຊິ່ງມີການຫັນປ່ຽນດີຂຶ້ນຕໍ່ເນື່ອງ; ໄດ້ສຳເລັດການຈັດສອບເສັງແຂ່ງຂັນນັກຮຽນເກັ່ງຊັ້ນມັດທະຍົມສຶກສາລະດັບຊາດ ປະຈຳສົກຮຽນ 2025-2026; ໄດ້ເຝິກຊ້ອມ ແລະ ສົ່ງນັກກິລາເຂົ້າຮ່ວມການແຂ່ງຂັນປະເພດຕ່າງໆຢູ່ຕ່າງປະເທດ, ອັນພົ້ນເດັ່ນແມ່ນການເຂົ້າຮ່ວມແຂ່ງຂັນບານເຕະຊາຍຊີງແຊ້ມອາຊຽນ ຮຸ່ນອາຍຸບໍ່ເກີນ 17 ປີ ທີ່ປະເທດອິນໂດເນເຊຍ ເຊິ່ງທີມຊາດລາວ ສາມາດຜ່ານເຂົ້າຮອບ 4 ທີມສຸດທ້າຍ; ໄດ້ເອົາໃຈໃສ່ວຽກງານໂຄສະນາ ແລະ ປັບປຸງວຽກງານການທ່ອງທ່ຽວ ຕິດພັນກັບການເຜີຍແຜ່ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ ເຂົ້າໃນບັນດາວຽກງານ, ກິດຈະກຳຕ່າງໆທີ່ສຳຄັນຂອງພັກ ແລະ ລັດ; ໄດ້ເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງ ແລະ ການບໍລິການສາທາລະນະສຸກ ໃຫ້ຮັບປະກັນຫຼາຍຂຶ້ນ; ໄດ້ສືບຕໍ່ປັບປຸງກົນໄກ ແລະ ວິທີການໃນການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ມີຄວາມວ່ອງໄວຂຶ້ນ; ໄດ້ເອົາໃຈໃສ່ການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ຕາມແຜນທີ່ສະພາແຫ່ງຊາດຮັບຮອງ ຄຽງຄູ່ກັນນັ້ນ ໄດ້ສຸມໃສ່ໂຄສະນາເຜີຍແຜ່ດ້ວຍຫຼາຍວິທີ ແລະ ຜ່ານຫຼາຍຊ່ອງທາງ; ໄດ້ສຳເລັດ ແລະ ປະກາດໃຊ້ນິຕິກຳສຳຄັນຕິດພັນກັບການກຳນົດລະບອບ, ລະບຽບການເຮັດວຽກຂອງຄະນະລັດຖະບານ ຊຸດທີ X ລວມທັງນິຕິກຳຮັບໃຊ້ການຄຸ້ມຄອງ ແລະ ແກ້ໄຂວຽກງານເຄັ່ງຮ້ອນ-ເລັ່ງດ່ວນຈຳນວນໜຶ່ງຕື່ມອີກ; ໄດ້ເອົາໃຈໃສ່ການເຄື່ອນໄຫວວຽກງານຕ່າງປະເທດຢ່າງມີຜົນໄຫວ ໂດຍສະເພາະການເຄື່ອນໄຫວຢ້ຽມຢາມບັນດາປະເທດເພື່ອນມິດ ແລະ ເຂົ້າຮ່ວມບັນດາກອງປະຊຸມສາກົນ, ການຕິດຕາມ ແລະ ອຳນວຍຄວາມສະດວກໃຫ້ແກ່ຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດທີ່ເດີນທາງມາຢ້ຽມຢາມ ສປປລາວ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ ກໍຍັງມີວຽກງານຈຳນວນໜຶ່ງ ທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂໃຫ້ມີການຫັນປ່ຽນດີຂຶ້ນກວ່າເກົ່າ ເປັນຕົ້ນ: ການແກ້ໄຂປາກົດການຫຍໍ້ທໍ້ທາງດ້ານສັງຄົມ, ການລົງທຶນຂອງລັດ, ການຊ່ວຍເຫຼືອຊາວກະສິກອນ, ການຄຸ້ມຄອງການຂຸດຄົ້ນແຮ່ທາດ, ການຄຸ້ມຄອງ-ກວດກາການບໍລິການຂົນສົ່ງໂດຍສານ, ການຮັກສາຄວາມສະອາດຈົບງາມ ແລະເປັນລະບຽບຮຽບຮ້ອຍໃນຕົວເມືອງ, ການສະໜອງໄຟຟ້າ ແລະ ນ້ຳປະປາ, ການພັດທະນາ-ປັບປຸງພື້ນຖານໂຄງລ່າງເສັ້ນທາງ, ການຄຸ້ມຄອງ ແລະ ແກ້ໄຂບັນຫາຂ່າວບິດເບືອນຜ່ານສື່ສັງຄົມອອນລາຍ, ການເຄົາລົບລະບຽບ-ກົດໝາຍ ແລະ ອື່ນໆ.

ສຳລັບທິດທາງແຜນວຽກຈຸດສຸມປະຈຳເດືອນພຶດສະພາ 2026, ກອງປະຊຸມໄດ້ຊີ້ນຳຂະແໜງການ, ທ້ອງຖິ່ນແລະພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ບັນດາວຽກງານສຳຄັນດັ່ງນີ້:

ສືບຕໍ່ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ໃນນັ້ນ: ສຸມໃສ່ຮັກສາຄວາມສະຫງົບຕາມແລວຊາຍແດນ,ແກ້ໄຂບັນຫາປາກົດການຫຍໍ້ທໍ້ຕ່າງໆທາງສັງຄົມ ໃຫ້ຫຼຸດໜ້ອຍຖອຍລົງ. ໃຫ້ກະຊວງປ້ອງກັນຄວາມສະຫງົບ ສືບຕໍ່ຈັດຕັ້ງປະຕິບັດຄຳສັ່ງສະບັບເລກທີ 11/ນຍ, ລົງວັນທີ 7 ສິງຫາ 2024 ວ່າດ້ວຍການເກັບກູ້ອາວຸດແລະວັດຖຸລະເບີດຢ່າງເດັດຂາດ ແລະ ເຂັ້ມງວດ; ໃຫ້ຮີບຮ້ອນປັບປຸງຄຳສັ່ງສະບັບເລກທີ 27/ນຍ, ລົງວັນທີ 5 ຕຸລາ 2021 ວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນ ແລະ ແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ; ເອົາໃຈໃສ່ເປັນພິເສດຕໍ່ການແກ້ໄຂບັນຫາສະແກມເມີ.

ສຸມໃສ່ກະກຽມບັນດາເນື້ອໃນທີ່ຈະນຳເຂົ້າລາຍງານຕໍ່ກອງປະຊຸມຄົບຄະນະ ຄັ້ງທີ 3 ຂອງຄະນະບໍລິຫານງານສູນກາງພັກສະໄໝທີ XII ໂດຍສະເພາະຮ່າງມະຕິວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນເປັນວາລະແຫ່ງຊາດ, ບັນດາຮ່າງກົດໝາຍ ແລະ ເອກະສານຕ່າງໆທີ່ຈະລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X.

ສຸມໃສ່ປະຕິບັດມາດຕະການຊຸກຍູ້, ສົ່ງເສີມການຜະລິດສິນຄ້າທົດແທນການນຳເຂົ້າ ແລະ ການຜະລິດເພື່ອສົ່ງອອກໃຫ້ແຂງແຮງ ພ້ອມທັງມີການກະກຽມ ແລະ ຄຸ້ມຄອງເນື້ອທີ່ທຳການຜະລິດເພື່ອບໍ່ໃຫ້ມີການບຸກລຸກປ່າໄມ້; ກະກຽມແນວພັນ, ຝຸ່ນ, ປຸ໋ຍ, ຢາປາບສັດຕູພືດ ແລະ ອື່ນໆ; ສືບຕໍ່ເອົາໃຈໃສ່ປະສານສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ປົກປັກຮັກສາສິ່ງແວດລ້ອມ ແລະ ເລັ່ງຄົ້ນຄວ້າອອກໃບຕາດິນໃຫ້ບັນລຸຕາມແຜນການທີ່ວາງໄວ້; ເອົາໃຈໃສ່ພິເສດການຕິດຕາມເຝົ້າລະວັງ ແລະ ແກ້ໄຂຢ່າງເຂັ້ມງວດການຈູດປ່າທຳການຜະລິດຂອງປະຊາຊົນ ທີ່ອາດກໍ່ໃຫ້ເກີດມີໄຟໄໝ້ລາມປ່າ; ກະກຽມການປູກຕົ້ນໄມ້ໃຫ້ເປັນຂະບວນການຢ່າງກວ້າງຂວາງ; ຄົ້ນຄວ້າການຈັດສັບປະດາຢຸດຕິການຈູດປ່າຫັນມາປູກຕົ້ນໄມ້.

ຄະນະກຳມະການຊີ້ນຳລະດັບຊາດສົ່ງເສີມການນຳໃຊ້ລົດໄຟຟ້າ ຮີບຮ້ອນຄົ້ນຄວ້າ ແລະ ວາງແຜນແມ່ບົດລະດັບຊາດ ເພື່ອບັນລຸການນຳໃຊ້ລົດໄຟຟ້າໃຫ້ໄດ້30% ໃນປີ2030 ແລະ ກ້າວໄປສູ່ການຫັນປ່ຽນຢ່າງສົມບູນໃນອະນາຄົດ.

ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຈັດຕັ້ງປະຕິບັດຄຳສັ່ງສະບັບ 06/ນຍ, ລົງວັນທີ 7 ມີນາ 2025 ວ່າດ້ວຍການຕິດຕາມ, ກວດກາ ແລະ ການແກ້ໄຂບັນຫາແຮ່ຄຳຕົກຂ້ອນ, ຫີນ ແລະ ຊາຍ ຕາມບັນດາສາຍນ້ຳ, ຮ່ອງຫ້ວຍ ແລະ ການຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆໃນຂອບເຂດທົ່ວປະເທດ; ຄຳສັ່ງເລກທີ 46/ນຍ, ລົງວັນທີ 13 ເມສາ2026ວ່າດ້ວຍການຕ້ານ ແລະ ສະກັດກັ້ນການລັກລອບຂຸດຄົ້ນ, ປຸງແຕ່ງ, ເກັບຊື້-ຂາຍ, ນຳເຂົ້າ-ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການໃນຂອບເຂດທົ່ວປະເທດ, ລວມທັງທິດຊີ້ ນຳຕ່າງໆຂອງລັດຖະບານ ຢ່າງເຂັ້ມງວດ ໂດຍໃຫ້ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນເປັນເຈົ້າການຊີ້ນຳສົມທົບແໜ້ນກັບກຳລັງປກຊ-ປກສ ສະກັດກັ້ນແລະປາບປາມຢ່າງຈິງຈັງ ເພື່ອແກ້ໄຂຢ່າງເດັດຂາດ, ໃນກໍລະນີພະນັກງານ-ລັດຖະກອນ, ຄະນະນຳແຕ່ລະຂັ້ນ ມີການກະທຳຜິດ ກໍໃຫ້ມີການປະຕິບັດວິໄນຢ່າງເຂັ້ມງວດ.

ສືບຕໍ່ລົງຕິດຕາມ,ກວດກາແລະ ຄຸ້ມຄອງບັນດາບໍລິສັດທ່ອງທ່ຽວ, ການບໍລິການຂົນ

ອ່ານຕໍ່ໜ້າ 4



## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 3)

ສິ່ງນັກທ່ອງທ່ຽວ, ໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ສະຖານທີ່ບັນເທີງ, ພະນັກງານນຳທ່ຽວ ທີ່ເຄື່ອນໄຫວເປີດບໍລິການບໍ່ຖືກຕ້ອງຕາມລະບຽບກົດໝາຍ ແລະ ເກັບກຳສະຖິຕິບັນດາຫົວໜ່ວຍທຸລະກິດທ່ອງທ່ຽວພ້ອມທັງແກ້ໄຂປາກົດການຫຍໍ້ທໍ້ທີ່ຕິດພັນໃນທຸລະກິດການທ່ອງທ່ຽວ.

ກະຊວງໂຍທາທິການ ແລະ ຂົນສົ່ງ ສືບຕໍ່ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງໃນຂອບເຂດທົ່ວປະເທດ ໂດຍສະເພາະບັນດາກິດຈະກຳແລະໂຄງການບຸລິມະສິດ ເພື່ອເຊື່ອມໂຍງ, ເຊື່ອມຈອດພາຍໃນ ແລະ ພາກພື້ນ ເອື້ອອຳນວຍໃຫ້ແກ່ການຜະລິດ,ການຄ້າ,ການທ່ອງທ່ຽວ ແລະ ການລົງທຶນ ໃຫ້ມີຄວາມຄືບໜ້າ ແລະ ສຳເລັດຕາມແຜນກຳນົດ; ສຳລັບນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃຫ້ພ້ອມກັນຕະລຸມບອນແກ້ໄຂບັນຫາທໍ່ລະບາຍນ້ຳບໍ່ໃຫ້ອຸດຕັນ ເພື່ອປ້ອງກັນບໍ່ໃຫ້ເກີດມີນ້ຳອັ່ງ, ນ້ຳຖ້ວມ ໃນເວລາມີຝົນຕົກໜັກ.

ສຸມໃສ່ການເກັບລາຍຮັບງົບປະມານຈາກແຫຼ່ງລາຍຮັບທີ່ມີແລ້ວ ໃຫ້ຄົບຖ້ວນດ້ວຍການສຸມໃສ່ການຫັນເປັນທັນສະໄໝໃຫ້ແຂງແຮງ ແລະ ປາກົດຜົນເປັນຈິງຫຼາຍຂຶ້ນເພື່ອໃຫ້ສາມາດເກັບລາຍຮັບເພີ່ມຂຶ້ນທົດແທນລາຍຮັບທີ່ຈະສູນເສຍຈາກການປະຕິບັດນະໂຍບາຍຫຼຸດຜ່ອນອັດຕາອາກອນຕ່າງໆ ກໍຄືຜົນກະທົບຕໍ່ສັງຄົມ; ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ຢູ່ໃນຂອບບໍ່ເກີນ ±1 ທຽບໃສ່ອັດຕາແລກປ່ຽນອ້າງອີງ; ດັດສົມເງິນຕາຕ່າງປະເທດ ເມື່ອເຫັນວ່າຈຳເປັນ ແລະໃຫ້ສາມາດຮັບປະກັນການສະໜອງເງິນຕາຕ່າງປະເທດໃຫ້ການຊຳລະການນຳເຂົ້າສິນຄ້າທີ່ຈຳເປັນ;ແລະໃຫ້ສືບຕໍ່ຈັດຕັ້ງປະຕິບັດການລວມສູນບັນຊີເງິນຝາກຂອງລັດຖະບານຢູ່ທະນາຄານແຫ່ງ ສປປລາວ.

ສຸມໃສ່ຈັດຕັ້ງຜັນຂະຫຍາຍຜົນກອງປະຊຸມສຸດຍອດຕ່າງໆ, ຜົນການເຄື່ອນໄຫວວຽກງານຕ່າງປະເທດຂອງການນຳພັກ-ລັດ, ແຜນຮ່ວມມືສອງຝ່າຍກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ຂອບການຮ່ວມມືຫຼາຍຝ່າຍໃນອະນຸພາກພື້ນໃຫ້ເປັນຮູບປະທຳຫຼາຍຂຶ້ນ; ກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການນຳຂັ້ນສູງເຄື່ອນໄຫວວຽກງານຢູ່ຕ່າງປະເທດ.

ແຕ່ລະກະຊວງ-ອົງການ ເຊື່ອມຊຶມ, ກຳແໜ້ນກົນໄກເຮັດວຽກຂອງລັດຖະບານ ຊຸດທີ X ແລະ ຫັນແຜນວຽກຈຸດສຸມຂອງລັດຖະບານ ຊຸດທີ X ມາເປັນແຜນດຳເນີນງານ ແລະ ແຜນຈັດຕັ້ງປະຕິບັດຂອງກະຊວງ-ອົງການຕົນ.

ສ່ວນບັນດາບົດລາຍງານເປັນຕົ້ນ 1) ສະພາບຜົນເດັ່ນພາກພື້ນ ແລະ ສາກົນ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ລວມທັງສະພາບອຸບັດເຫດ, ອັກຄີໄພ ແລະ ບັນດາປາກົດການຫຍໍ້ທໍ້ໃນໄລຍະບຸນປີໃໝ່ລາວ; 2) ຄວາມຄືບໜ້າໃນການປັບປຸງສ້ອມແປງເສັ້ນທາງໃນທົ່ວປະເທດ; 3) ການແກ້ໄຂຜົນກະທົບຈາກພະຍຸໝາກເຫັບ; 4) ການກະກຽມຕ້ານໄພແຫ້ງແລ້ງ, ສະພາບໄຟໄໝ້ປ່າ, ການຖາງປ່າ-ຈູດປ່າ, ການແກ້ໄຂບັນຫາໝອກຄວັນ (PM2.5)ພ້ອມທັງສະເໜີມາດຕະການແກ້ໄຂ; 5) ການປະຕິບັດຄຳສັ່ງ40/ນຍວ່າດ້ວຍການແກ້ໄຂບັນຫານ້ຳມັນ ແລະ ຫັນວິກິດເປັນໂອກາດ ເພື່ອນຳໃຊ້ລົດໄຟຟ້າ ແລະ ພະລັງງານທົດແທນ, ການແກ້ໄຂບັນຫາການລັກລອບຂຸດຄົ້ນແຮ່ທາດ ແລະ ທິດທາງການຄຸ້ມຄອງການພັດທະນາແຮ່ທາດໃນຕໍ່ໜ້າບົນພື້ນຖານການກວດກາແລະປະເມີນໂຄງການທີ່ໄດ້ອະນຸມັດຜ່ານມາ; 6) ສະພາບອັດຕາແລກປ່ຽນ, ເງິນເຟີ້ ແລະ ມາດຕະການແກ້ໄຂ. ກອງປະຊຸມໄດ້ຊີ້ນຳພາກສ່ວນກ່ຽວຂ້ອງ ໄປປັບປຸງຕາມຄຳເຫັນຂອງສະມາຊິກລັດຖະບານ ໂດຍສະເພາະການກຳນົດທິດທາງແຜນການ ກໍຄືແຜນວຽກຈຸດສຸມໃນຕໍ່ໜ້າ ໃຫ້ລະອຽດຈະແຈ້ງ, ຄົບຖ້ວນ, ແທດຕົວຈິງ, ລົງເລິກກະກຽມຄວາມພ້ອມຮັບມືຕໍ່ສະພາບຄວາມສ່ຽງ ແລະ ທ່າອຽງຕ່າງໆທີ່ອາດເກີດຂຶ້ນ, ຮັບປະກັນການຈັດຕັ້ງປະຕິບັດທັງໄລຍະສັ້ນ-ໄລຍະຍາວ, ມີຄວາມວ່ອງໄວທັນການ, ມີປະສິດທິພາບ ແລະ ປະສິດທິຜົນ ທັງສາມາດແກ້ໄຂໄດ້ບັນດາຂໍ້ຄົງຄ້າງ, ຊ່ອງວ່າງການສວຍໂອກາດ ແລະ ທາງສຽງບໍ່ດີຕ່າງໆໃນຂົງເຂດວຽກງານດັ່ງກ່າວ.

ວາລະທີ 2 ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາຮ່າງນິຕິກຳ ຈຳນວນ 2 ສະບັບຄື: 1) ຮ່າງແຜນຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປລາວ 10 ປີ (2026-2035) ແລະ ວິໄສທັດຮອດປີ 2045; 2) ຮ່າງດຳລັດວ່າດ້ວຍກອງທຶນກັນແລະຄວບຄຸມເຊື້ອພະຍາດເອດ (HIV). ກອງປະຊຸມໄດ້ຊີ້ນຳໃຫ້ພາກສ່ວນກ່ຽວຂ້ອງ ນຳເອົາບັນດາຮ່າງນິຕິກຳດັ່ງກ່າວ ໄປປັບປຸງຕື່ມບາງດ້ານເປັນຕົ້ນ: ການຈັດລຽງເນື້ອໃນ ແລະ ໂຄງສ້າງນິຕິກຳ, ການກຳນົດຈຸດປະສົງ, ການອະທິບາຍຄຳສັບ, ການກຳນົດຂໍ້ຫ້າມ, ການກຳນົດເນື້ອໃນວຽກງານໂຄສະນາປຸກລະດົມ ແລະ ການມີສ່ວນຮ່ວມຂອງພາກສ່ວນຕ່າງໆ ເຮັດໃຫ້ບັນດານິຕິກຳມີເນື້ອໃນຄົບຖ້ວນສົມບູນ, ລະອຽດ-ຈະແຈ້ງ, ຮັດກຸມ, ສອດຄ່ອງກັບບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ໄດ້ປະກາດໃຊ້ແລ້ວ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ພັນທະສັນຍາຜູກພັນຕ່າງໆ, ພາຍຫຼັງປະກາດໃຊ້ແລ້ວໃຫ້ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ; ນອກນັ້ນ, ກອງປະຊຸມຍັງໄດ້ຄົ້ນຄວ້າຮ່າງດຳລັດວ່າດ້ວຍການຖອນສິດນຳໃຊ້ທີ່ດິນ ໂດຍໄດ້ຊີ້ນຳໃຫ້ຂະແໜງການກ່ຽວຂ້ອງ ນຳໄປສືບຕໍ່ຄົ້ນຄວ້າປັບປຸງ, ຈັດສຳມະນາລະດົມຄວາມຄິດເຫັນຈາກຫຼາຍພາກສ່ວນຕື່ມອີກ.

ໃນຕອນທ້າຍ, ທ່ານນາຍົກລັດຖະມົນຕີ ໄດ້ຮຽກຮ້ອງບັນດາທ່ານສະມາຊິກລັດຖະບານ ຈົ່ງນຳເອົາແຜນວຽກຈຸດສຸມເດືອນພຶດສະພາ ທີ່ກອງປະຊຸມໄດ້ເອກະພາບກັນ ໄປປັບປຸງເຂົ້າໃນແຜນວຽກຂອງຂະແໜງການຕົນ ໃຫ້ລະອຽດ, ມີການແບ່ງຄວາມຮັບຜິດຊອບໃຫ້ການຈັດຕັ້ງ, ບຸກຄະລາກອນແຕ່ລະຂັ້ນ ແລະ ມີຄາດໝາຍເວລາສຳເລັດທີ່ຊັດເຈນ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະຂະແໜງການ.

**(ກົມປະຊາສຳພັນ, ຫສນຍ)**




## ສຳເລັດ...

(ຕໍ່ຈາກໜ້າ 1)

ສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13, ສະມາຊິກສະພາປະຊາຊົນແຂວງ ພ້ອມດ້ວຍແຂກຖືກເຊີນຈາກພາກສ່ວນຕ່າງໆ ເຊິ່ງກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງແຂວງ ດັ່ງນີ້:

- ຮັບຟັງການລາຍງານກ່ຽວກັບຜົນຂອງການເລືອກຕັ້ງ ແລະ ຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາປະຊາຊົນແຂວງ ຊຸດທີ V.
- ເລືອກຕັ້ງ ແລະ ຮັບຮອງກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ ເຊັ່ນ: ປະທານ, ຮອງປະທານ ແລະ ກຳມະການຄະນະປະຈຳສະພາປະຊາຊົນແຂວງ; ຮັບຮອງກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ ແລະ ເລືອກຕັ້ງບັນດາປະທານຄະນະກຳມະການ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຄື:

1. ທ່ານ ບຸນໂຈມ ອຸບົນປະເສີດ ເປັນປະທານສະພາປະຊາຊົນແຂວງ ທັງເປັນປະທານ ຄປຈສພຂ;
2. ທ່ານ ພູລຳພອນ ສີຫາວົງ ເປັນຮອງປະທານສະພາປະຊາຊົນແຂວງ ທັງເປັນຮອງປະທານ ຄປຈສພຂ;
3. ທ່ານ ສີສະຫວາດ ເພັງທະລັງສີ ເປັນຮອງປະທານສະພາປະຊາຊົນແຂວງ ທັງເປັນຮອງປະທານ ຄປຈສພຂ;
4. ທ່ານ ພັທ. ສຸລິພົງ ລາດສະໂພ ເປັນກຳມະການ ຄປຈສພຂ ທັງເປັນປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ;
5. ທ່ານ ນາງ ທົງຄຳ ໄຊຍະຄົມ ເປັນກຳມະການ ຄປຈສພຂ ທັງເປັນປະທານຄະນະກຳມະການເສດຖະກິດ,ການເງິນ ແລະ ສິ່ງແວດລ້ອມ;
6. ທ່ານ ສີທາ ສົງວິໄລ ເປັນກຳມະການ ຄປຈສພຂ ທັງເປັນປະທານຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ;
7. ທ່ານ ໄຊຍະເດດ ຜຸຍຍະວົງ ເປັນກຳມະການ ຄປຈສພຂທັງເປັນຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ.

- ຮັບຮອງການສະເໜີຍົກຍ້າຍຫົວໜ້າພະແນກອຸດສາຫະກຳແລະການຄ້າແຂວງ, ຫົວໜ້າພະແນກສຶກສາທິການແລະກິລາແຂວງ.
- ຮັບຮອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງແຂວງ 5 ປີ ຄັ້ງທີ X (2026-2030).
- ຮັບຮອງແຜນການການເຄື່ອນໄຫວວຽກງານ 5 ປີ (2026-2030) ຂອງອົງການກວດກາລັດແຂວງ, ອົງການກວດສອບປະຈຳພາກກາງ 2, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ ແລະ ສະພາປະຊາຊົນແຂວງ.
- ຮັບຮອງແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 5 ປີ (2026-2030) ຂອງຄະນະກຳມະການປົກຄອງແຂວງ ຈຳນວນ 21 ສະບັບ (ສ້າງໃໝ່ 14 ສະບັບ, ປັບປຸງ 7 ສະບັບ).

**(ກົງທະນູຄຳ ພິພັດເສລີ)**

## ມອບເງິນ...

(ຕໍ່ຈາກໜ້າ 1)

(ສພຊ) - ໃນໂອກາດເຂົ້າຮ່ວມກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ V, ວັນທີ 24 ເມສາ 2026 ທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ໄດ້ມອບເງິນຊ່ວຍເຫຼືອໃຫ້ເມືອງພິນ, ເມືອງຊົນນະບູລີ ແລະ ເມືອງອາດສະພັງທອງ ທີ່ປະສົບອຸທົກກະໄພ ແລະ ອັກຄີໄພ ໂດຍມອບໃຫ້ເມືອງລະ 30 ລ້ານກີບ ລວມທັງໝົດ 90 ລ້ານກີບ ເຊິ່ງເງິນຈຳນວນດັ່ງກ່າວ ແມ່ນໄດ້ມາຈາກການລະດົມທຶນຂອງ ສສຊ ປະຈຳເຂດເລືອກຕັ້ງທີ 13; ການມອບເງິນຄັ້ງນີ້ ເປັນການສະແດງເຖິງຄວາມຫ່ວງໄຍຂອງບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ໃນຖານະເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືປະຊາຊົນໃນເຂດປະສົບໄພ ພ້ອມທັງເປັນກຳລັງໃຈໃຫ້ທ້ອງຖິ່ນ ຟື້ນຟູຄວາມເສຍຫາຍ ແລະ ກັບຄືນສູ່ສະພາບປົກກະຕິໂດຍໄວ.

ໂອກາດນີ້, ຍັງໄດ້ມອບປຶ້ມ 50 ປີ ແຫ່ງການພົວພັນລະຫວ່າງສະພາແຫ່ງຊາດລາວແລະສະພາແຫ່ງຊາດຫວຽດນາມ ຈຳນວນ 99 ຫົວ ໃຫ້ສະພາປະຊາຊົນແຂວງ ແລະ ທ່ານ ສົມບູນ ສີຫານາດ ສສຊ ປະຈຳເຂດເລືອກຕັ້ງທີ 13 ໄດ້ມອບຄອມພິວເຕີຕັ້ງຕັກ (laptop) ຈຳນວນ 2 ໜ່ວຍ ລວມມູນຄ່າ 28 ລ້ານກີບ ໃຫ້ຫ້ອງວ່າການສະພາປະຊາຊົນແຂວງ.

**(ກົງທະນູຄຳ ພິພັດເສລີ)**






## ຕິດຕາມ...

(ຕໍ່ຈາກໜ້າ 1)

(ສພຂ) - ວັນທີ 24 ເມສາຜ່ານມາ, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງແຂວງ, ນຳໂດຍທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສູນກາງພັກ, ກຳມະການອະນຸກຳມະການການບໍລິຫານ, ພິທີການ ແລະ ງົບປະມານ ຄະນະກຳມະການເລືອກຕັ້ງລະດັບຊາດພ້ອມດ້ວຍຄະນະ, ໄດ້ເຄື່ອນໄຫວຕິດຕາມ, ຊຸກຍູ້ການນຳໃຊ້ງົບປະມານ ພາຍຫຼັງເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V, ໂດຍມີທ່ານ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ມີຮອງຫົວໜ້າອະນຸກຳມະການບໍລິຫານ, ພິທີການ ແລະ ງົບປະມານແລະພະນັກງານຊ່ວຍວຽກຂັ້ນແຂວງ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານຫຍໍ້ ສະພາບການນຳໃຊ້ງົບປະມານ ຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ, ພາຍຫຼັງເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V ແລະວຽກງານອື່ນໆອີກຈຳນວນໜຶ່ງ ໃນການກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V.

ຈາກນັ້ນ, ກອງປະຊຸມໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ, ທາງດ້ານຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆໃນການການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ແລະ ເພື່ອເປັນຊຸກຍູ້, ຊອກຫາວິທີທາງແກ້ໄຂບັນ ຫາທາງດ້ານງົບປະມານເກີນແຜນທີ່ທາງຄະນະກຳມະການເລືອກຕັ້ງລະດັບຊາດຈັດສັນໃຫ້ແຂວງ, ພ້ອມທັງຮັບປະກັນ ການນຳໃຊ້ງົບປະມານໃຫ້ສຳເລັດຜົນຕາມຄາດໝາຍທີ່ວາງໄວ້.

ແລະໃນວັນທີ 4 ພຶດສະພານີ້, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ເປີດກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງຂຶ້ນ, ໂດຍການເປັນປະທານຂອງທ່ານ ບຸນຄົງ ຫຼ້າຈຽມພອນ ກຳມະການສູນກາງພັກ, ປະທານສະພາປະຊາຊົນແຂວງ, ມີທ່ານ ປອ ວົງສະຫວັນ ໄຊຍະວົງ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ, ບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ, ພະແນກການ ແລະ ຂະແໜງກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານໜັງສືສະເໜີຂອງປະທານຄະນະກຳມະການປົກຄອງແຂວງ ຈຳນວນ 6 ສະບັບຄື: ໜັງສືສະເໜີ ປະທານຄະນະກຳມະການປົກຄອງແຂວງ ກ່ຽວກັບການພິຈາລະນາຮັບຮອງການຈັດສັນແຜນລາຍຈ່າຍເງິນເກີນແຜນ 2025 ນຳໃຊ້ປີ 2026 ແຂວງອຸດົມໄຊ, ສະບັບເລກທີ 210/ຄປຂ; ກ່ຽວກັບການພິຈາລະນາ, ຮັບຮອງແຜນການລົງທຶນຂອງລັດປະຈຳປີ 2026 ແຂວງອຸດົມໄຊ (ທຶນພັດທະນາຊຸມຊົນ), ສະບັບເລກທີ 944/ຄປຂ; ກ່ຽວກັບການພິຈາລະນາ, ຮັບຮອງການຈັດສັນເງິນເກີນແຜນ ປີ 2025 ເຂົ້າໃນການຊຳລະໜີ້ສິນຂອງລັດ ປີ 2026 ແຂວງອຸດົມໄຊ, ສະບັບເລກທີ 541/ຄປຂ; ກ່ຽວກັບການພິຈາລະນາອອກມະຕິຕົກລົງວ່າດ້ວຍການ ຫັນປ່ຽນປະເພດທີ່ດິນກະສິກຳໄປເປັນທີ່ດິນປຸກສ້າງທີ່ຢູ່ອາໄສ ຢູ່ເມືອງໄຊ, ແຂວງອຸດົມໄຊ ສະບັບເລກທີ 332/ຄປຂ; ກ່ຽວກັບການພິຈາລະນາ, ຮັບຮອງ ແຜນຈັດນຳໃຊ້ທີ່ດິນຂັ້ນເມືອງຂອງເມືອງຮຸນ, ເມືອງແບງ, ແຂວງອຸດົມໄຊ ສະບັບເລກທີ0076/ຄປຂ ແລະ ພ້ອມກັນນັ້ນ, ໄດ້ຮັບຟັງບົດລາຍງານການຄົ້ນຄ້ວາໜັງ ສືສະເໜີດັ່ງກ່າວຂອງຄະນະປະຈຳສະພາປະຊາຊົນແຂວງ.

ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ສະເໜີຄຳຖາມເຈາະຈີ້ມ, ຈຸດປະສົງແມ່ນເພື່ອໃຫ້ບັນດາທ່ານໃນຄະນະປະຈຳສະພາປະຊາຊົນແຂວງ ໄດ້ມີຄຳເຫັນແລກປ່ຽນ, ຊັກຖາມເພີ່ມເຕີມ ແລະ ພະແນກການກ່ຽວຂ້ອງໄດ້ຊີ້ແຈງ ແລະ ໃຫ້ຂໍ້ມູນເພີ່ມເຕີມ, ທັງນີ້ກໍ່ເພື່ອເປັນການຮັບປະກັນໃນການຈັດຕັ້ງປະຕິບັດໜັງສືສະເໜີ ໃຫ້ມີຄວາມຖືກຕ້ອງ ສອດຄອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນກົດໝາຍແລະລະບຽບການ.

ກອງປະຊຸມ, ຍັງໄດ້ຜ່ານຮ່າງແຜນລົງເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລືກຂອງສະພາປະຊາຊົນແຂວງ ຊຸດທີ V; ຮ່າງມະຕິຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງວ່າດ້ວຍການແຕ່ງຕັ້ງສະມາຊິກສະພາ ແຫ່ງຊາດ ເປັນສະມາຊິກສະພາປະຊາຊົນແຂວງ ອັດຕະໂນມັດແລະແບ່ງຄວາມຮັບຜິດຊອບໃຫ້ບັນດາ ສະມາຊິກສະພາແຫ່ງຊາດປະຈຳຢູ່ເຂດເລືອກຕັ້ງແຕ່ລະເມືອງ; ຮ່າງມະຕິຕົກລົງຂອງຄະນະປະຈຳສະພາປະຊາຊົນ ແຂວງອຸດົມໄຊ ວ່າດ້ວຍການບັນຈຸຊັບຊ້ອນສະມາຊິກສະພາປະຊາຊົນແຂວງ ຊຸດທີ V ສັງກັດແຕ່ລະຄະນະກຳມະການ ແລະ ຮ່າງສະຫຼຸບຕີລາຄາຄືນການເຄື່ອນໄຫວວຽກງານປະຈຳເດືອນ 3 ແລະ ເດືອນ 4 ແລະວາງທິດທາງແຜນການ ປະຈຳເດືອນ ພຶດສະພາ 2026; ພ້ອມທັງ, ໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງເນື້ອໃນດັ່ງກ່າວ ຢ່າງກົງໄປກົງມາ ເພື່ອເຮັດໃຫ້ຄົບຖ້ວນສົມບູນ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ.

ໃນວັນທີ 6 ພຶດສະພານີ້, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ເຜີຍແຜ່ມູນເຊື້ອວັນກຳມະກອນສາກົນ ຄົບຮອບ 140 ປີ, ໂດຍການເປັນປະທານຂອງສະຫາຍທອງໄຊທໍ່ຈິງເລ່ຍຈີຄະນະບໍລິຫານງານສະຫະພັນກຳມະບານແຂວງ, ປະທານກຳມະບານຮາກຖານສະພາປະຊາຊົນແຂວງ, ມີສະຫາຍ ນາງ ຄຳໝັ້ນແກ້ວບຸນຫອນກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີຄະນະກຳມະບານຮາກຖານສະພາປະຊາຊົນແຂວງ ແລະ ສະມາຊິກກຳມະບານພາຍໃນກຳມະບານຮາກຖານສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍ ທອງໄຊ ທໍ່ຈິງເລ່ຍຈີຄະນະບໍລິຫານງານສະຫະພັນກຳມະບານແຂວງ, ປະທານກຳມະບານຮາກຖານສະພາປະຊາຊົນແຂວງ, ໄດ້ເຜີຍແຜ່ເອກະສານໂຄສະນາປະຖະກະຖາວັນກຳມະກອນສາກົນ ຄົບຮອບ 140 ປີ (1 ພຶດສະພາ 1886-1 ພຶດສະພາ 2026) ເຊິ່ງໄດ້ຍົກໃຫ້ເຫັນປະຫວັດຄວາມເປັນມາຄື: ໃນທ້າຍສັດຕະວັດທີ XVIII ຫາຕົ້ນສັດຕະວັດທີ XIX ຫຼາຍປະເທດໃນທະວີບເອີລົບ; ອາເມລິກາ ໄດ້ໂຄ່ນລົ້ມລະບອບສັກດີນາ ແລະ ສ້າງຕັ້ງລະບອບນາຍທຶນຂຶ້ນແທນ, ຍ້ອນຄວາມຮຽກຮ້ອງຕ້ອງການຂອງສັງຄົມໃນການຕອບສະໜອງທາງດ້ານວັດຖຸສິ່ງ ຂອງຕ່າງໆ ເຂົ້າໃນການຮັບໃຊ້ຊີວິດປະຈຳວັນນັບມື້ສູງຂຶ້ນ. ໃນເວລານັ້ນ, ຍັງມີຫຼາຍປະເທດບໍ່ທັນສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມໄດ້, ຈຶ່ງໄດ້ນຳພາປະເທດຂອງຕົນກ້າວເຂົ້າສູ່ການຜະລິດແບບອຸດສາຫະກຳ, ສ້າງໂຮງຈັກ, ໂຮງງານຂຶ້ນຫຼາຍແຫ່ງ. ຈາກນັ້ນ, ຈຳນວນກຳມະກອນກໍ່ມີການເຕີບໃຫຍ່ຂະຫຍາຍຕົວແລະ ຢູ່ພາຍໃຕ້ການປົກຄອງຂອງພວກນາຍທຶນ, ຊົນຊັ້ນກຳມະກອນໄດ້ຖືກກົດຂີ່ຂູດຮີດນັບມື້ຍິ່ງໜັກໜ່ວງຊຶ່ງສະແດງອອກ: ການອອກແຮງງານສຸດທີ່ລຳບາກ ແລະ ມີຄວາມສ່ຽງສູງຕໍ່ຊີວິດ ເນື່ອງຈາກລະບົບປ້ອງກັນໄພແຮງງານຂອງເຄື່ອງຈັກໃນເວລານັ້ນຍັງບໍ່ທັນມີ, ນາຍທຶນນັບມື້ເພີ່ມທະວີການບັງຄັບ, ຂົ່ມເຫັງໃຫ້ກຳມະກອນອອກແຮງງານໂດຍບໍ່ມີເວລາພັກຜ່ອນມື້ໜຶ່ງເຮັດວຽກ 14-15 ຊົ່ວໂມງ. ຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານຈຳເປັນຈຶ່ງໄດ້ຈັດຕັ້ງກັນ ເປັນກຸ່ມ, ເປັນຂະບວນລຸກຮື້ຂຶ້ນຕໍ່ສູ້ກັບຊົນຊັ້ນນາຍທຶນ, ທວງໃຫ້ພວກນາຍທຶນເພີ່ມເງິນເດືອນ ແລະ ຫຼຸດຜ່ອນຊົ່ວໂມງ ເຮັດວຽກລົງ.



ວັນທີ 1 ພຶດສະພາ 1886 ໃນປະເທດອາເມລິກາ ຢູ່ຕົວເມືອງຊິກາໂກເປັນຄັ້ງທຳອິດທີ່ຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ໄດ້ມີການຕໍ່ສູ້ໂດຍຖືເອົາເນື້ອໃນຂອງຖະແຫຼງການ, ຮຽກຮ້ອງໃຫ້ພວກນາຍທຶນຕ້ອງປະຕິບັດຕາມການສະເໜີຂອງກຳມະກອນວ່າ: "ແຕ່ນີ້ຕໍ່ໄປບໍ່ໃຫ້ກຳມະກອນຜູ້ໃດເຮັດວຽກເກີນ 8 ຊົ່ວໂມງຕໍ່ມື້ເຊັ່ນ: 8 ຊົ່ວໂມງ ຕ້ອງພັກຜ່ອນ, 8 ຊົ່ວໂມງເຮັດວຽກ ແລະ 8 ຊົ່ວໂມງຕ້ອງໄດ້ຮ່ຳຮຽນ" ຈາກເຫດການດັ່ງກ່າວ ມັນໄດ້ສ້າງກະແສຟອງອັນໃຫຍ່ຫຼວງ ແລະ ແຂງແຮງເຖິງຂະບວນການກຳມະກອນຢູ່ທະວີບເອີລົບ ແລະ ທະວີບອາເມລິກາ ເປັນກຳລັງໃຈໃຫ້ຂະບວນການຕໍ່ສູ້ຂອງກຳມະກອນໃນທົ່ວໂລກ, ທັງເປັນບາດກ້າວຂະຫຍາຍຕົວແຫ່ງໄຊຊະນະ, ເປັນວັນທີ່ມີຄວາມໝາຍອັນສຳຄັນໃຫຍ່ຫຼວງຂອງຊົນຊັ້ນກຳມະກອນໃນຂະບວນການຕໍ່ສູ້ ເພື່ອປົກປ້ອງສິດທິ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ແລະ ຍັງໄດ້ຍົກໃຫ້ເຫັນ.

ຫຼັງຈາກນັ້ນ, ໄດ້ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານເດືອນເມສາ ແລະ ແຜນການເດືອນພຶດສະພາ 2026 ແລະ ບັນດາສະຫາຍສະມາຊິກກຳມະບານຮາກຖານສະພາປະຊາຊົນແຂວງ ໄດ້ປະກອບຄຳຄິດຄຳເຫັນ ໃສ່ຮ່າງບົດສະຫຼຸບດັ່ງກ່າວ ຢ່າງກົງໄປກົງມາ, ເພື່ອໃຫ້ເນື້ອໃນຄົບຖ້ວນສົມບູນ, ພ້ອມທັງໄດ້ຕຳນິສິ່ງຂ່າວເຊິ່ງກັນ ແລະ ກັນ ຢ່າງຈິງອົກຈິງໃຈ ຕື່ມອີກ.





ສຸກສະບາຍຫາຍໂຣຄ

# ສານອາຫານຕ້ານອະນຸມູນອິດສະຫຼະ ບອກລາພະຍາດພູມແພ້

# ຮຽບຮຽງໂດຍ: ທອມສະນິດ



ໃຜທີ່ເປັນພູມແພ້ເຄີຍໄດ້ຍິນຄຳວ່າ ພາວະຄຽດອອກຊິເດຊັ່ນ (oxidative stress) ບໍ?

ພາວະນີ້ເກີດຈາກການເສຍສົມດຸນຂອງສານຕ້ານອະນຸມູນອິດສະຫຼະໃນຮ່າງກາຍ ສິ່ງຜົນຕໍ່ການເຮັດວຽກຂອງຈຸລັງ ກະຕຸ້ນໃຫ້ຫຼັ່ງສານທີ່ເຮັດໃຫ້ເກີດການອັກເສບ ແລະອະນຸມູນອິດສະຫຼະຫຼາຍຂຶ້ນ ເຮັດໃຫ້ມີອາການໄອ, ຫອບ, ຜື່ນແພ້ຜິວໜັງ ເປັນຕົ້ນ ເຊິ່ງມີການສຶກສາພົບວ່າຄົນທີ່ກິນອາຫານທີ່ມີລິດຕ້ານອະນຸມູນອິດສະຫຼະຕໍ່າ ກໍຈະໄປເພີ່ມຄວາມສ່ຽງໃນການເກີດພະຍາດຫອບຫືດ ແລະ ພູມແພ້ນຳ; ດັ່ງນັ້ນ, ການເລືອກກິນອາຫານທີ່ມີສານຕ້ານອະນຸມູນອິດສະຫຼະສູງ ກໍຈະຊ່ວຍສ້າງພູມຄຸ້ມກັນໃຫ້ກັບຮ່າງກາຍຂອງເຮົາໃຫ້ແຂງແຮງເພີ່ມຂຶ້ນນັ້ນເອງ.

ຖ້າໃຜຢາກບອກລາພູມແພ້ ມື້ນີ້ຄໍລຳ ສຸກສະບາຍຫາຍໂລຄາ ໄດ້ລວມສານຕ້ານອະນຸມູນອິດສະຫຼະທີ່ຫາກິນໄດ້ງ່າຍໆມາຝາກ ດັ່ງນີ້:

ວິຕາມິນຊີ: ຊ່ວຍຫຼຸດສານຮີສຕາມີນໃນຮ່າງກາຍ ແລະ ເຮັດໃຫ້ອາການດັງອັກເສບພູມແພ້ດີຂຶ້ນ ພົບຫຼາຍໃນໝາກກ້ຽງ, ໝາກສີດາ, ໝາກເຜັດຫວານ, ຜັກກາດນາ.

ວິຕາມິນອີ: ຊ່ວຍຕໍ່ຕ້ານສານອະນຸມູນອິດສະຫຼະ ປົກປ້ອງຈຸລັງ ແລະ ປອດຈາກມົນລະພິດທາງອາກາດ ໂດຍສາມາດເສີມວິຕາມິນອີໄດ້ຈາກແກ່ນຕາເວັນ, ແອລມ່ອນ, ໝາກອາໂວກາໂດ, ໝາກມ່ວງ.

ວິຕາມິນເອ: ມີເບຕ້າແຄໂຣທີນ ທີ່ຊ່ວຍເພີ່ມລະບົບພູມຄຸ້ມກັນໃຫ້ແຂງແຮງ ແລະ ກະຕຸ້ນພູມຕ້ານທານໃນຮ່າງກາຍ ພົບຫຼາຍໃນໝາກໄມ້ທີ່ມີສີເຊັ່ນແຄຣ໋ອດ, ໝາກອຶ, ໝາກໂມ, ໝາກຮຸ່ງ.

DHA: ເປັນກົດໄຂມັນໃນຕະກູນໂອເມກ້າ 3 ຊ່ວຍເພີ່ມພູມຄຸ້ມກັນ ໂດຍສະເພາະເດັກນ້ອຍ ຫຼຸດການອັກເສບ ປັບສົມດຸນອິມມູນ ເຊິ່ງພົບໄດ້ຫຼາຍໃນນົມ, ປາທູ, ປາແຊລມ່ອນ, ປາສະຫວາຍ.

ຟລາໂວນອຍ: ມີເຄວ໋ຊິຕິນ ຊ່ວຍຫຼຸດການຫຼັ່ງສານຮິສຕາມິນ ແລະ ຫຼຸດການອັກເສບພູມແພ້, ຫຼຸດການຄັດເຄືອງດັງ, ຕ້ານການອັກເສບ, ຊ່ວຍຊະລໍຄວາມເສື່ອມຂອງຈຸລັງ ພົບໄດ້ຫຼາຍໃນອາຫານໄດ້ແກ່ ຂີ້ໝິ້ນ, ຜັກທຽມ, ຫົວຜັກບົ່ວນ້ອຍ, ຫົວຜັກບົ່ວໃຫຍ່.

ຊີລີນ່ຽມ: ເປັນສານຕ້ານອະນຸມູນອິດສະຫຼະທີ່ສ້າງກລູຕ່າໄທໂອນເພີຣອກຊິເດສ ຊ່ວຍປັບພູມຄຸ້ມກັນໃນຮ່າງກາຍ ເຮັດໃຫ້ອາການໂລກຫອບຫືດ ແລະ ສະມັດຖະພາບປອດດີຂຶ້ນ ເຊິ່ງພົບໄດ້ຫຼາຍໃນກຸ້ງ, ປູ, ສາລີ, ບ໊ອກເຄີລີ່.

ທັງນີ້, ກົນໄກໃນການນຳສານຕ້ານອະນຸມູນອິດສະຫຼະໄປໃຊ້ໃນແຕ່ລະຄົນບໍ່ຄືກັນຂຶ້ນຢູ່ກັບລະບົບເຜົາຜານ ແລະ ຢີນ ນອກຈາກນີ້, ການກິນສານຕ້ານອະນຸມູນອິດສະຫຼະຫຼາຍເກີນໄປ ກໍອາດເກີດໂທດໄດ້ ດັ່ງນັ້ນ, ຈຶ່ງຄວນກິນແຕ່ພໍດີ ແລະ ແນະນຳມາເຈາະເລືອດເພື່ອກວດວັດແທກພູມຕ້ານທານໃນຮ່າງກາຍຈະດີກວ່ານັ້ນເອງ.

**ແຫຼ່ງຂໍ້ມູນ: ສຸຂະພາບມາກ່ອນ**

ອາດ ກະວີລາວ

# ພໍ່ສອນໃຫ້ເປັນນາຍ

# ເກັ່ງ ແສງສຸລິເຍດ

❊ ຍັງພໍຈຳຈື່ໄດ້
ກ່ອນຊິໄປໂຮງຮຽນ
ໃຫ້ລູກຮຽນຈົບໄດ້
ຮຽນຈຶ່ງເດີ່ນຕໍ່ຕັ້ງ

ຕອນເກົ່າເຍົາໄວ
ພໍ່ເຄີຍສອນໄວ້
ເປັນນາຍນຳເພິ່ນ
ຟັງເລື່ອງພໍ່ສອນ

❊ ເລົ່າເລື່ອງກ່າວຍ້ອນ
ໝູ່ນັກຮຽນພຽນອິດ
ແນມເບິ່ງໃຜກໍຫັນຫ້າວ
ເພາະພໍ່ເຮົາວ່າໄວ້

ຕອນທີ່ຍັງຮຽນ
ອ່ານຂຽນພຽນແຕ້ມ
ຈິງຈັງໃຈໃສ່
ໃຫ້ຮຽນໄດ້ດັ່ງໃຈ

❊ ໝາຍວ່າຮຽນໃຫ້ໄດ້
ຮຽນໃຫ້ເປັນນາຍໝົດ
ບໍ່ເຫຼືອພຽງພໍໄວ້
ເຮັດໃຫ້ວຽກບໍ່ກ້າວ

ເປັນໃຫຍ່ເປັນໂຕ
ຊຸ່ຄົນຈົນກ້ຽງ
ເປັ່ນຄົນງານການກໍ່
ເພາະຫຼາຍລົ້ນຫຼາກນາຍ

❊ ເປັນນາຍພຽງຍ່າງຍ້າຍ
ຫຼືກໍລໍລາຍງານ
ບໍ່ເຄີຍເສຍແຮງໃຫ້
ເມື່ອເປັນນາຍຢູ່ແລ້ວ

ຊອມເບິ່ງຄົນງານ
ສິ່ງມານຳເຈ້ຍ
ກາຍາອອກເຫື່ອ
ໃຜຊິເວົ້າບໍ່ສົນ

❊ ບາງຄົນຮຽນດັ້ນດົ້ນ
ຈົບຕຣີໃນເມ-ກາ
ບາງຄົນເຮຣາກ້ອງ
ມາເປັນນາຍອັ່ງບ້ານ

ມາຈາກເມືອງໄກ
ຊໍາແຊວໂຮຮ້ອງ
ຮຽນໂທຈາກຝຣັ່ງ
ເຕັມລົ້ນຖິ່ນຖານ

❊ ວຽກຈຳເປັນຢູ່ບ້ານ
ບໍ່ແມ່ນການດີໄຊຣ໌
ມີແຕ່ໄປຮຽນຮູ້
ໃຜຊິເປັນຜູ້ສ້າງ

ຄືອອກເຫື່ອແຮງງານ
ຢູ່ຄອມພິວເຕີ້
ຈົບມາບໍ່ເຮັດວຽກ
ໃຫ້ເມືອງບ້ານຮຸ່ງເຮືອງ

❊ ຫຼືວ່າຜິດບ່ອນເບື້ອງ
ພໍ່ຄວນສອນແນວດີ
ສອນໃຫ້ເອົາແຮງສູ້
ອອກແຮງງານທຸກດ້ານ

ບິດາສັ່ງສອນມາ ບໍນໍ
ສິ່ງເຮົາຮຽນຮູ້
ນຳວິຊາປະກອບສ່ວນ
ວິຊາຮູ້ຊ່ວຍເສີມ ຊັ້ນຕວ່າ!



# ໜ້າຊາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມຫ້ຽນ

❊ **ໄລ**ຍະສະເຫຼີມສະຫຼອງສົ່ງທ້າຍປີເກົ່າ ແລະ ຕ້ອນຮັບປີໃໝ່ລາວ ມີຂ່າວແຈ້ງໃຫ້ຮູ້ວ່າ ເລີ່ມແຕ່ 12-18 ເມສາ ທົ່ວປະເທດມີອຸບັດເຫດເກີດຂຶ້ນ 228 ກໍລະນີ ມີພາຫະນະເປ່ເພ 397 ຄັນ ໃນນັ້ນ, ມີຜູ້ບາດເຈັບ 362 ຄົນແລະ ເສຍຊີວິດ 23 ຍິງ 2 ພຸ້ນວ່າ! ອັນວ່າເຫດຮ້າຍ ລັບລີ້ບໍ່ລະວັງ ທັງດື່ມສິ່ງມຶນເມົາ ແລ່ນໄວອາຟ້າວ ມີແຕ່ເອົາຄວາມສູນສິ້ນຈັບສິນຫຼາຍຢ່າງ ຈົ່ງລະວັງແດ່ຫ້ອນຜ່ອນຄັນເລັ່ງ ແລ່ນຊ້າ ກໍຮອດໄດ້ດັ່ງປະສົງ **ທ່ານເອີຍ!**

❊ **ຊົມ**ເຊີຍວັນກຳມະກອນສາກົນທີ່ໄດ້ໝູນວຽນມາບັນຈົບຄົບຮອບອີກວາລະໜຶ່ງ (1 ພຶດສະພາ 1886-1 ພຶດສະພາ 2026) ຮ້ອຍສີ່ສິບປີເຂົ້າ ກຳມະກອນເຮົາໂດດເດັ່ນເປັນກຳລັງເຮັດໃຫ້ ເມືອງບ້ານຮຸ່ງວິໄລ ໂລກາຈົດຈື່ໄວ້ບຸນຄຸນໃຫຍ່ຫຼວງຫຼາຍ ເຕົ້າໂຮມທວງເອົາສິດປະຊາທິປະໄຕ ທົ່ວດິນແດນດ້າວ ຊາວຜູ້ອອກແຮງງານຍ່ອຍ້ອງ ຊົມເຊີຍຜົນງານໃຫຍ່ໂລກາຈາລຶກໄວ້ ແລະ ໃນໂອກາດດັ່ງກ່າວນີ້ ອວຍພອນໃຫ້ທຸກທ່ານເປັ! ຂໍໃຫ້ກຳມະກອນທຸກຄົນ ຈົ່ງມີອາຍຸ, ວັນນະ, ສຸຂະ, ພະລັງ **ໝັ້ນຍືນໆ!**

# ຊອບຍິ້ມ

# ພົ້ງລຶ່ງ

## ເລື່ອງ: ໃຜກັນແທ້

ມີເດັກຊາຍຄົນໜຶ່ງ ຍ່າງເຂົ້າໄປຮ້ານຕັດຜົມ, ຊ່າງຕັດຜົມເຫັນ ຈຶ່ງຊຶມໃສ່ຫູລູກຄ້າທີ່ກຳລັງຕັດຜົມຢູ່ວ່າ: "ບັກນ້ອຍໆນີ້ມັນປຶກ... ປຶກໄດ໋, ເບິ່ງເດີ ຂ້ອຍຊິທົດລອງໃຫ້ເຈົ້າເບິ່ງ"

ຈາກນັ້ນ, ຊ່າງຕັດຜົມກໍຍ່າງໄປຢືນຢູ່ຕໍ່ໜ້າເດັກຊາຍ ພ້ອມມືຂວາຈັບເງິນໃບ 50 ພັນ ມືຊ້າຍຈັບໃບ 10 ພັນ, ພ້ອມເອົ້າຂຶ້ນວ່າ: ເອ໊າ ບັກຫຼ້າ ອ້າຍໃຫ້ໂຕເລືອກ ໂຕຊິເອົາໃບໃດ"; ເດັກຊາຍຈຶ່ງຈັບເອົາໃບ 10 ພັນ ແລ້ວຍ່າງອອກໄປ; ຊ່າງຕັດຜົມຈຶ່ງຫຼຽວໄປຍິ້ມໃຫ້ກັບລູກຄ້າ "ເຫັນບໍ່ລະ, ຂ້ອຍວ່າລະ ມັນປຶກອີຫຼີ"

ເມື່ອລູກຄ້າຕັດຜົມແລ້ວ ກໍເຫັນເດັກຊາຍຢືນກິນເຂົ້າໜົມຢູ່ໜ້າຮ້ານ ເລີຍເຂົ້າໄປຖາມດ້ວຍຄວາມສົງໄສວ່າ: "ບັກຫຼ້າ ເປັນຫຍັງໂຕຄືເອົາໃບ 10 ພັນ ຄືບໍ່ເອົາໃບ 50 ພັນ", ເດັກຊາຍກິນເຂົ້າໜົມຢ່າງສະບາຍໃຈ ພ້ອມຕອບໄປວ່າ : "ຖ້ານີ້ໄດ້ຂ້ອຍເອົາໃບ 50 ພັນ ອ້າຍລາວກະຊິເຊົາຫຼິ້ນ, ຂ້ອຍກະບໍ່ໄດ້ກິນເຂົ້າໜົມຊັ້ນຕ໋ວ່າ".

## ສຸພາສິດ-ຄະຕິເຕືອນໃຈ

# ດອກຫຍ້າ

ໃຈໃຫ້ໃສສະເໝີນ້ຳ
ໃຫ້ເຈົ້າຄິດຖີ່ຖອນ

ຄົງຄາສະໝຸດໃຫຍ່
ດີແລ້ວຈຶ່ງຄ່ອຍຈາ

ລັດຖະສະພາຕ່າງປະເທດ

# ສະພານິຕິບັນຍັດສູງສຸດຂອງຈີນ ປິດກອງປະຊຸມຄະນະປະຈຳ

(Xinhua) - ຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ຊຸດທີ XIV ປິດກອງປະຊຸມຄັ້ງທີ 22 ເມື່ອວັນພະຫັດທີ 30 ເມສາຜ່ານມາ ຫຼັງຈາກດຳເນີນເປັນເວລາ 4 ວັນ ໂດຍການເປັນປະທານຂອງ ຈ້າວ ເລີ້ຈີ້ ປະທານຄະນະປະຈຳ NPC.

ໃນວັນປິດກອງປະຊຸມ, ສະມາຊິກສະພາໄດ້ລົງມະຕິຮັບຮອງເອົາກົດໝາຍວ່າດ້ວຍຄຸກ ສະບັບປັບປຸງ ແລະ ກົດໝາຍວ່າດ້ວຍການຊ່ວຍເຫຼືອທາງສັງຄົມ.

ນອກຈາກນີ້, ທີ່ປະຊຸມຍັງໄດ້ລົງມະຕິແຕ່ງຕັ້ງ ຈາງ ຈູ (Zhang Zhu) ເປັນລັດຖະມົນຕີກະຊວງກະສິກຳ ແລະ ກິດຈະການຊົນນະບົດ ແທນ ຮັນ ຈຸນ (Han Jun), ແລະ ແຕ່ງຕັ້ງ ຈາງ ເສິງຈົງ (Zhang Chengzhong) ເປັນລັດຖະມົນຕີກະຊວງການຈັດການເຫດສຸກເສີນ.

ສີ ຈິ້ນຜິງ ໄດ້ລົງນາມໃນຄຳສັ່ງປະທານປະເທດ 2 ສະບັບ ເພື່ອປະກາດໃຊ້ກົດໝາຍ ແລະ ສະບັບທີ 3 ເພື່ອປະກາດການຕັດສິນໃຈກ່ຽວກັບການປ່ຽນແປງບຸກຄະລາກອນ.

ສະມາຊິກສະພາຍັງໃຫ້ສັດຕະຍາບັນສົນທິສັນຍາວ່າດ້ວຍການຊ່ວຍເຫຼືອດ້ານຂະບວນການຍຸຕິທຳທາງອາຍາກັບອາແຊກໄບຊານ ແລະ ສົນທິສັນຍາວ່າດ້ວຍບ້ານໃກ້ເຮືອນຄຽງທີ່ດີ, ມິດຕະພາບ ແລະ ການຮ່ວມມືແບບຖາວອນລະຫວ່າງຈີນກັບ 5 ປະເທດໃນອາຊີກາງ; ນອກຈາກນີ້, ຍັງໄດ້ຜ່ານບົດລາຍງານກ່ຽວກັບມາດຕະຖານຂອງຜູ້ແທນປະຊາຊົນແຕ່ລະຄົນ ແລະ ຮ່າງກົດໝາຍອື່ນໆທີ່ກ່ຽວຂ້ອງກັບບຸກຄະລາກອນ.

ໃນການກ່າວປິດກອງປະຊຸມ, ຈ້າວຮຽກຮ້ອງໃຫ້ສະມາຊິກສະພານິຕິບັນຍັດ ປັບປຸງຄຸນນະພາບວຽກງານຂອງສະພາຜູ້ແທນປະຊາຊົນທົ່ວປະເທດໃຫ້ດີຂຶ້ນກວ່າເກົ່າ ແລະ ປະກອບສ່ວນເຂົ້າໃນການເລີ່ມຕົ້ນທີ່ເຂັ້ມແຂງສຳລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ XV; ເນັ້ນໜັກເຖິງຄວາມສຳຄັນຂອງການເຮັດວຽກເພື່ອປະຊາຊົນ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງປະຊາຊົນ, ແລະ ການປັບປຸງສະຫວັດດີພາບຂອງປະຊາຊົນໃຫ້ສອດຄ່ອງກັບກົດໝາຍ.

ກ່ອນປິດກອງປະຊຸມ, ຈ້າວ ໄດ້ເປັນປະທານກອງປະຊຸມຄະນະປະທານຄະນະປະຈຳສະພາ NPC ແລະ ຫຼັງຈາກນັ້ນໄດ້ເປັນປະທານໃນການບັນລະຍາຍໃຫ້ແກ່ສະມາຊິກສະພານິຕິບັນຍັດ.



# ຄະນະກຳມະການເລືອກຕັ້ງ Palestine ປະກາດຜົນການເລືອກຕັ້ງທ້ອງຖິ່ນໃນເຂດ West Bank, Gaza



(Xinhua)-ວັນອາທິດທີ 26 ເມສາຜ່ານມາ, ຄະນະກຳມະການເລືອກຕັ້ງສູນກາງປາແລັດສະຕິນ (Central Elections Commission - CEC) ປະກາດຜົນການເລືອກຕັ້ງທ້ອງຖິ່ນຢ່າງເປັນທາງການໃນ 183 ເທດສະບານທົ່ວເຂດເວສຕ໌ ແບງກ໌ ທີ່ຖືກຢຶດຄອງ ແລະ ໃນເມືອງເດຍ ອັລ-ບາລາ (Deiral-Balah) ໃນເຂດກາຊາ.

ຣາມີ ຮຳດັລລາ (Rami Hamdallah) ປະທານ CEC ກ່າວໃນການຖະແຫຼງຂ່າວວ່າ ການລົງຄະແນນສຽງເກີດຂຶ້ນພາຍໃຕ້ເງື່ອນໄຂທີ່ "ຊັບຊ້ອນທີ່ສຸດ" ແຕ່ດຳເນີນໄປດ້ວຍ "ຄວາມຊື່ສັດ ແລະ ຄວາມໂປ່ງໃສ"; ເຂົາກ່າວວ່າ ການລວມເອົາເມືອງເດຍ ອັລ-ບາລາ ສະທ້ອນໃຫ້ເຫັນເຖິງຄວາມພະຍາຍາມທີ່ຈະປະຕິບັດຕໍ່ເຂດເວສຕ໌ແບງກ໌ ແລະ ເຂດກາຊາ ເປັນຫົວໜ່ວຍທາງພູມສາດດຽວ (single geographic unit), ເຖິງຈະມີອຸປະສັກສຳຄັນກໍຕາມ.

ຮຳດັລລາ ກ່າວວ່າ ທາງການອິດສະຣາແອນ ປະຕິເສດທີ່ຈະອະນຸຍາດໃຫ້ອຸປະກອນການເລືອກຕັ້ງເຂົ້າໄປໃນເມືອງເດຍ ອັລ-ບາລາ, ເຮັດໃຫ້ເຈົ້າໜ້າທີ່ທ້ອງຖິ່ນຕ້ອງຜະລິດບັດ ແລະ ຫີບເລືອກຕັ້ງໃນພື້ນທີ່ ເພື່ອໃຫ້ການລົງຄະແນນສຽງດຳເນີນຕໍ່ໄປ.

ຄະນະກຳມະການກ່າວວ່າ ມີຜູ້ລົງຄະແນນສຽງປະມານ 522,000 ຄົນ ຈາກຜູ້ມີສິດເລືອກຕັ້ງປະມານ 1.03 ລ້ານຄົນ; ອັດຕາການໃຊ້ສິດເລືອກຕັ້ງ 56% ໃນເຂດເວສຕ໌ແບງກ໌ ແລະ 23% ໃນເມືອງເດຍ ອັລ-ບາລາ.

ຮຳດັລລາ ອ້າງວ່າ ບັນທຶກລາຍຊື່ຜູ້ມີສິດເລືອກຕັ້ງໃນເຂດກາຊາແມ່ນລ້າສະໄໝ ແລະ ຜົນກະທົບຂອງການຂັດແຍ້ງທີ່ຍັງດຳເນີນຢູ່, ລວມທັງການເສຍຊີວິດ ແລະ ການຍົກຍ້າຍຖິ່ນຖານ ແມ່ນສາເຫດຂອງການມີສ່ວນຮ່ວມຕ່ຳໃນພື້ນທີ່ດັ່ງກ່າວ.

ນີ້ແມ່ນການເລືອກຕັ້ງທ້ອງຖິ່ນຄັ້ງທຳອິດໃນເຂດກາຊາໃນຮອບເກືອບ 20 ປີ.

ຮາເຊມ ກັສເຊມ (Hazem Qassem) ໂຄສົກຂອງຂະບວນການຮາມາສ (Hamas) ກ່າວວ່າ ການເລືອກຕັ້ງຄັ້ງນີ້ ເນັ້ນຢ້ຳເຖິງຄວາມຄວາມຈຳເປັນໃນການປະຕິຮູບສະຖາບັນທາງການເມືອງຂອງປາແລັດສະຕິນ ແລະ ຮຽກຮ້ອງໃຫ້ມີການເລືອກຕັ້ງສະພານິຕິບັນຍັດ ແລະ ປະທານາທິບໍດີທີ່ຊັກຊ້າມາດົນແລ້ວ.

# ສະພາຕ່ຳຍີ່ປຸ່ນ ອະນຸມັດຮ່າງກົດໝາຍ ສ້າງຕັ້ງຄະນະກຳມະການສືບລັບແຫ່ງຊາດ



(Xinhua)-ວັນພະຫັດທີ 23 ເມສາຜ່ານມາ, ສະພາຜູ້ແທນລາດສະດອນຍີ່ປຸ່ນ ໄດ້ຜ່ານຮ່າງກົດໝາຍສ້າງຕັ້ງຄະນະກຳມະການສືບລັບແຫ່ງຊາດ ເຊິ່ງເປັນການເຄື່ອນໄຫວທີ່ເຮັດໃຫ້ເກີດຄຳຖາມ ແລະ ຄວາມກັງວົນຈາກສາທາລະນະຊົນ.

ສຳນັກຂ່າວ Kyodo News ລາຍງານວ່າ ກົດໝາຍສະບັບນີ້ມີຂຶ້ນເນື່ອງຈາກນາຍົກລັດຖະມົນຕີ ຊານາເອະ ທາຄາອິຈິ (Sanae Takaichi) ມຸ່ງໝັ້ນທີ່ຈະລວມສູນຄວາມສາມາດດ້ານສືບລັບຂອງປະເທດພາຍໃຕ້ສະພາດຽວ.

ຕາມຮ່າງກົດໝາຍ, ຄະນະກຳມະການໃໝ່ນີ້ ຈະມີໜ້າທີ່ປະສານງານ "ກິດຈະກຳສືບລັບທີ່ສຳຄັນ" ໃນຂົງເຂດຕ່າງໆ ເຊັ່ນ: ຄວາມໝັ້ນຄົງແຫ່ງຊາດ ແລະ ການຕໍ່ຕ້ານການກໍ່ການຮ້າຍ, ລວມເຖິງ "ກິດຈະກຳສືບລັບໃນຕ່າງປະເທດ" ທີ່ກ່ຽວຂ້ອງກັບການຈາລະກຳຕ່າງປະເທດ; ຮ່າງກົດໝາຍຍັງລະບຸວ່າ ເລຂານຸການຂອງຄະນະກຳມະການຈະ "ປະສານງານຢ່າງຮອບດ້ານ" ວຽກງານສືບລັບລະຫວ່າງກະຊວງ ແລະ ອົງການຕ່າງໆຂອງລັດຖະບານ, ໂດຍມີສິດອຳນາດໃນການຮ້ອງຂໍໃຫ້ອົງການເຫຼົ່ານັ້ນແບ່ງປັນຂໍ້ມູນ.

ລະຫວ່າງການອະພິປາຍໃນສະພາຕ່ຳກ່ຽວກັບຮ່າງກົດໝາຍ, ພັກຝ່າຍຄ້ານໄດ້ສະແດງຄວາມກັງວົນກ່ຽວກັບໄພຂົ່ມຂູ່ທີ່ອາດເກີດຂຶ້ນຕໍ່ຄວາມເປັນສ່ວນຕົວ ແລະ ຄວາມສາມາດໃນການຮັກສາຄວາມເປັນກາງທາງການເມືອງຂອງຄະນະກຳມະການໃໝ່ນີ້.

ກ່ອນທີ່ຮ່າງກົດໝາຍຈະຜ່ານ, ມີການຈັດການປະທ້ວງໃນຍີ່ປຸ່ນ ໂດຍຜູ້ປະທ້ວງຄັດຄ້ານການທີ່ລັດຖະບານໃຊ້ "ການສອດແນມຢ່າງໂຈ່ງແຈ້ງ" ເປັນຂໍ້ອ້າງເພື່ອຂະຫຍາຍການສອດແນມທາງສັງຄົມ ແລະ ຮຽກຮ້ອງໃຫ້ມີການປົກປ້ອງຄວາມເປັນສ່ວນຕົວ ແລະ ສິດທິຂັ້ນພື້ນຖານທີ່ຮັບປະກັນໂດຍລັດຖະທຳມະນູນ, ລວມທັງເສລີພາບໃນການສະແດງອອກ.

ມິຊູໂຮະ ຟຸກຸຊິມະ (Mizuho Fukushima) ຫົວໜ້າພັກສັງຄົມປະຊາທິປະໄຕ ກ່າວໃນການໃຫ້ສຳພາດສື່ມວນຊົນວ່າ ເຖິງລັດຖະບານຈະອ້າງວ່າຈະບໍ່ສືບສວນ "ພົນລະເມືອງທຳມະດາ" ຕາມອຳເພີໃຈ, ແຕ່ຂອບເຂດລະຫວ່າງພົນລະເມືອງ "ທຳມະດາ" ແລະ "ບໍ່ທຳມະດາ" ຍັງບໍ່ຊັດເຈນ ເຊິ່ງນາງກ່າວວ່າ ເປັນເລື່ອງທີ່ໜ້າເປັນຫ່ວງຫຼາຍ ແລະ ຊີ້ໃຫ້ເຫັນເຖິງຂໍ້ບົກຜ່ອງທີ່ແທ້ຈິງຂອງຮ່າງກົດໝາຍ.

ສື່ມວນຊົນຍີ່ປຸ່ນໄດ້ຕັ້ງຄຳຖາມເຊັ່ນກັນ, ໂດຍໂຕ້ແຍ້ງວ່າລັດຖະບານຕ້ອງອະທິບາຍຢ່າງລະອຽດເຖິງຄວາມຈຳເປັນໃນການເສີມສ້າງອົງການສືບລັບ ແລະ ຈັດການກັບຄວາມສ່ຽງທີ່ອາດເກີດຂຶ້ນຕໍ່ສະຖາບັນປະຊາທິປະໄຕ.

ຄາດວ່າກົດໝາຍຈະຖືກປະກາດໃຊ້ຫຼັງຈາກຜ່ານສະພາຜູ້ແທນລາດສະດອນ ເຊິ່ງມີໂອກາດສູງທີ່ຈະໄດ້ຮັບການອະນຸມັດ; Kyodo News ລາຍງານວ່າ ຫຼັງຈາກມີການປະກາດໃຊ້ກົດໝາຍດັ່ງກ່າວ, ລັດຖະບານຂອງນາງ ທາຄາອິຈິ ມີເປົ້າໝາຍທີ່ຈະເປີດຕົວຄະນະກຳມະການໃນລະດູຮ້ອນນີ້.

ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ບັນຫາທີ່ບໍ່ຄາດຄິດ ແຕ່ມີພິດພໍ່ສົມຄວນ

ມື້ນີ້ມີແນວມາເວົ້າໃຫ້ຟັງ 1 ເລື່ອງຄື: ເລື່ອງວັນທີ 1 ເມສາ ທີ່ຫຼາຍໆຄົນບອກວ່າເປັນວັນຂີ້ຕົວະລະດັບອິນເຕີ; ສຳລັບເລື່ອງວັນທີ 1 ເມສາ ຂອງທຸກໆປີ ທີ່ຫຼາຍຄົນຖືວ່າເປັນວັນຂີ້ຕົວະ ແບບບໍ່ມີໃຜເອົາໂທດເອົາໂພຍ ແຕ່ກໍບໍ່ມີໃຜສົນ ແລະ ຊອກຮູ້ວ່າວັນດັ່ງກ່າວ ກຳເນີດເກີດຂຶ້ນຢູ່ໃສກ່ອນ, ປີໃດ, ມີການຢັ້ງຢືນ ແລະ ຮັບຮູ້ລະດັບໃດ. ຜູ້ຂຽນເອງກໍມືດປານປິດຕາ ແຕ່ກໍບໍ່ສົນໃຈຊອກຫາຕົ້ນປາຍສາຍເຫດຄືເລື່ອງວັນວາເລັນທາຍ (ວັນແຫ່ງຄວາມຮັກ) ແລະ ວັນສາກົນອື່ນໆ.

ຫຼາຍຄົນຖືເອົາວັນທີ 1 ເມສາ ເປັນວັນຊອກເລື່ອງຕົວະກັນ ເພື່ອສ້າງບັນຍາກາດເບີກບານມ່ວນຊື່ນ, ເນື້ອໃນທີ່ເອົາມາຕົວະກັນ ກໍຕ້ອງໄດ້ຄິດຫງຳບໍ່ໃຫ້ຊ້ຳເກົ່າ ເຊິ່ງບາງຄັ້ງກໍພາໃຫ້ເກີດລະເບີດສຽງຫົວຈົນທ້ອງຂົດທ້ອງໄຂ; ແຕ່ພ້ອມດຽວກັນ, ກໍມີຂ່າວເສົ້າວ່າ ການເວົ້າຕົວະບາງກໍລະນີໄດ້ລ້ຳເສັ້ນແດງເຮັດໃຫ້ຜູ້ຖືກຕົວະຕື່ນຕົກໃຈເກີດປະສາດຫຼອນ, ຮ້ອນຮົນ ເຊັ່ນ: ຕົວະກ່ຽວກັບເລື່ອງອຸບັດເຫດ, ການລົ້ມການຕາຍ ແລະ ເລື່ອງຫາຍະນະອື່ນໆ ນີ້ເຂົາເອີ້ນການຕົວະທີ່ເປັນພິດເປັນໄພ. ເຄີຍໄດ້ຟັງການເລົ່າຈາກບຸກຄົນທີ່ເກີດວັນທີ 1 ເມສາ ເລື່ອງຜູ້ກ່ຽວຈັດງານວັນເກີດ ແຕ່ແຂກບໍ່ຍອມມາຮ່ວມ ຍ້ອນເຊື່ອວ່າເປັນເລື່ອງຂີ້ຕົວະ, ແມ່ນອນເຈົ້າຂອງວັນເກີດ ກໍຄຶງເມື່ອຍມະໂນ ໂຊເຊໄປບໍ່ແມ່ນຂອງຢອກ. ເວົ້າແທ້ການເວົ້າຕົວະຫຼອກລໍ້ອໍ້ແອ້ກັນ ເພື່ອສ້າງບັນຍາກາດນັ້ນ ບໍ່ເປັນຫຍັງ, ແຕ່ການເວົ້າຕົວະກັນໃຫ້ຕື່ນຕົກໃຈຈົນເອິກສັ່ນຂວັນເສຍນັ້ນ ຢ່າເນີ ມັນອັນຕະລາຍ ແລະ ຜິດສິນຫ້າ ຂໍ້ 4 (ມຸສາ...).

ຂໍ້ມູນທີ່ບໍ່ມີໃຜຢັ້ງຢືນບອກວ່າ ວັນຂີ້ຕົວະ 1 ເມສານີ້ ມີມາກວ່າ 500 ປີແລ້ວ ຢູ່ຊີກໂລກຕາເວັນຕົກ, ເປົ້າໝາຍຂອງວັນດັ່ງກ່າວ ແມ່ນເວົ້າຕົວະກັນເພື່ອຢອກໄຍໃຫ້ເກີດສຽງຫົວ ຈາກການທີ່ໃຜຜູ້ໜຶ່ງຖືກຕົວະໃຫ້ຫຼົງເຊື່ອ ແລ້ວກໍແກ້ກັບວ່າບໍ່ມີຄວາມຈິງ; ແນວໃດກໍແນວ, ເພື່ອບໍ່ໃຫ້ການຕົວະລ້ຳເສັ້ນແດງ, ໃນປີ 2019 ກ່ອນໜ້າວັນທີ 1 ເມສາ, ທາງບໍລິສັດຍັກໃຫຍ່ໄມໂຄຼຊອບ (Microsoft) ໄດ້ຮຽກຮ້ອງໃຫ້ເຫຼົ່າພະນັກງານຂອງບໍລິສັດບໍ່ໃຫ້ຢອກລໍ້ກັນດ້ວຍຄຳເວົ້າຂີ້ຕົວະເດັດຂາດ. ທ່ານ ຄຣິສ ຄາໂປເອລາ (Chris CAPOE LA) ຫົວໜ້າຄຸ້ມຄອງພະນັກງານບໍລິສັດບອກວ່າ ຄຳເວົ້າຂີ້ຕົວະແມ່ນຄອບຄົວດຽວກັບຂ່າວປອມ, ນິໄສເວົ້າຕົວະ ຈະນຳໄປສູ່ການສ້າງຂ່າວປອມ ທີ່ລະບາດແຮງໃນໂລກປັດຈຸບັນ.

**ຂໍ້ມູນຂອງບົດນີ້ຖອດມາຈາກ**
**Vnexpress net 9/4/2019**




*#ບ່າວກະບື*

| | |
|---|---|
| **ກ້ອມ:** | "ແມ່ຍິງຂີ້ຮ້າຍທ້າຍເປບັ່ງຢູ່ແຈຫັ້ນ, ແມ່ນໃຜຫວະ?" |
| **ຄຳພາ:** | "ເປັນຫຍັງ? ຫັ້ນລະເມຍເຮົາ" |
| **ກ້ອມ:** | "ໂອ! ເຮົາບໍ່ໝາຍເຖິງລາວ (ພະຍາຍາມແກ້ໂຕ), ເຮົາໝາຍເຖິງແມ່ຍິງຜູ້ບັ່ງຖັດໄປຫັ້ນ" |
| **ຄຳພາ:** | "ນັ້ນຖືລູກສາວເຮົາ" |

***#BAOKBU***

| | |
|---|---|
| **KOM:** | "Who is that awful-looking lady in the corner?" |
| **KHAMPHA:** | "Why, that's my wife" |
| **KOM:** | "Oh, I don't Mean het (trying to escape), I mean the lady next to her" |
| **KHAMPHA:** | "That is my daughter" |

## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ທານຂອງທ່ານ ບຸນຈັນ ສິວິງພັນ ກຳມະການສູນກາງພັກ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ບັນດາທ່ານຮອງປະທານ ແລະ ຫົວໜ້າ-ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນຂັ້ນແຂວງ 9 ແຂວງຄື: ນະຄອນຫຼວງວຽງຈັນ, ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ ແລະ ຊຽງຂວາງ ພ້ອມດ້ວຍວິທະຍາກອນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ບຸນຈັນ ສິວິງພັນ ກ່າວວ່າ: ເນື້ອໃນທີ່ນຳມາຄົ້ນຄວ້າ, ປຶກສາຫາລືແລະປະກອບຄຳຄິດຄຳເຫັນໃນຄັ້ງນີ້ ລ້ວນແຕ່ເປັນນິຕິກຳທີ່ສຳຄັນ ແລະ ຈຳເປັນຫຼາຍ ເພາະເປັນໝາກຫົວໃຈສຳຄັນຂອງການປະຕິບັດໜ້າທີ່ເປັນຕົວແທນຂອງປະຊາຊົນລາວບັນດາເຜົ່າ ເພື່ອເກັບກຳ, ສັງລວມຄວາມຄິດຄວາມເຫັນຂອງປະຊາຊົນ ນຳໄປລາຍງານຕໍ່ພາກສ່ວນກ່ຽວຂ້ອງ ໄດ້ຮັບຮູ້ບັນຫາຕ່າງໆ, ກໍາໄດ້ສະພາບຄວາມຂັດຂ້ອງໝອງໃຈຂອງປະຊາຊົນ ແລ້ວນຳໄປພິຈາລະນາແກ້ໄຂຢ່າງຖືກຕ້ອງ, ສອດຄ່ອງຕາມລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ໄດ້ກຳນົດຂັ້ນຕອນ, ຂະບວນການຕ່າງໆ ໃນການພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ເຊິ່ງເປັນບົດຮຽນທີ່ສຳຄັນ ໂດຍຜ່ານການທົດລອງຈັດຕັ້ງປະຕິບັດມາແລ້ວໃນຂອບເຂດທົ່ວປະເທດ ຈາກສະພາແຫ່ງຊາດ ຊຸດທີ IX ເພື່ອຮັບປະກັນການພົບປະປະຊາຊົນຂອງ ສສຊ ແລະ ສສຂ ກໍຄືການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນເປັນກ້າວໆ.

ກອງປະຊຸມໄດ້ຮັບຟັງສະພາບລວມວຽກງານການພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງ), ການລົງເລີກພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ອີງໃສ່ປຶ້ມຄູ່ມືພົບປະປະຊາຊົນ ແລະ ການເຄື່ອນໄຫວວຽກງານຕົວຈິງ), ການໃຫ້ການສະໜັບສະໜູນວຽກງານພົບປະປະຊາຊົນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບ, ສຸມສະຕິປັນຍາ ເຂົ້າໃນການແລກປ່ຽນຄຳຄິດເຫັນເພື່ອໃຫ້ເຂົ້າໃຈຢ່າງຈະແຈ້ງ ແລ້ວນຳໄປຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງຢ່າງປະດິດສ້າງ, ເໝາະສົມ ແລະ ສອດຄ່ອງກັບສະພາບຈຸດພິເສດຂອງແຕ່ລະແຂວງ.

**(ນາງ ກຸກກິກ ບຸດດາໄຊ)**



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 27 ເມສາ 2026, ທ່ານ ນາງ ດາລານີ ພົມມະວົງສາ ສະມາຊິກສະພາແຫ່ງຊາດ (ສສຊ), ຮອງລັດຖະມົນຕີກະຊວງວັດທະນະທຳແລະການທ່ອງທ່ຽວ ພ້ອມດ້ວຍຄະນະຜູ້ແທນສະພາແຫ່ງຊາດ ໄດ້ເຂົ້າຮ່ວມກອງປະຊຸມຄະນະກຳມະການປະສານງານສະມາຊິກລັດຖະສະພາເພດຍິງໄອປາ ຫຼື ໄອປາ (WAIPA) ຄັ້ງທີ 5 ໃນຮູບແບບທາງໄກ ພາຍໃຕ້ຫົວຂໍ້ "ສົ່ງເສີມການຫັນປ່ຽນວຽກງານບົດບາດຍິງ-ຊາຍຂອງລັດຖະສະພາ ໄປສູ່ປະຊາຄົມອາຊຽນທີ່ກວມລວມ ແລະ ມີຄວາມພ້ອມໃນອະນາຄົດ" ໂດຍການເປັນປະທານຂອງທ່ານນາງແອນມາຕິແບັກ (Ann Matibag) ປະທານກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ ເຊິ່ງມີທ່ານເລຂາທິການໃຫຍ່ໄອປາ, ສະມາຊິກລັດຖະສະພາເພດຍິງຈາກບັນດາລັດຖະສະພາທີ່ເປັນສະມາຊິກໄອປາ ເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ເພື່ອຍົກສູງຄວາມຮັບຮູ້ໃຫ້ແກ່ສະມາຊິກລັດຖະສະພາເພດຍິງ ກ່ຽວກັບການຫັນປ່ຽນດ້ານບົດບາດຍິງ-ຊາຍຂອງລັດຖະສະພາ ໄປສູ່ປະຊາຄົມອາຊຽນທີ່ກວມລວມ ແລະ ມີຄວາມພ້ອມໃນອະນາຄົດ ທັງເປັນການຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດແຜນປະຕິບັດງານ ແລະ ຂອບແຜນການຈັດຕັ້ງປະຕິບັດການສົ່ງເສີມການມີສ່ວນຮ່ວມທາງດ້ານການເມືອງ ແລະ ການເປັນຜູ້ນຳຂອງແມ່ຍິງ (WPPL) ໃນປີ 2024-2025 ຂອງບັນດາປະເທດສະມາຊິກໄອປາ.

ໃນກອງປະຊຸມ ໄດ້ມີການສົນທະນາ, ປຶກສາຫາລື ແລະ ແລກປ່ຽນຄຳເຫັນ ຕໍ່ກັບຫົວຂໍ້ທີ່ນຳມາແລກປ່ຽນ ເຊິ່ງຄະນະຜູ້ແທນລາວໄດ້ປະກອບຄຳເຫັນຕໍ່ກັບຫົວຂໍ້ "ການຫັນປ່ຽນລັດຖະສະພາດ້ານບົດບາດຍິງ-ຊາຍຂອງລັດຖະສະພາ ທີ່ບໍ່ພຽງແຕ່ເປັນການເພີ່ມຈຳນວນຂອງເພດຍິງໃນຕຳແໜ່ງການຕັດສິນໃຈ, ແຕ່ຍັງກ່ຽວກັບການຫັນປ່ຽນລະບົບ, ໂຄງສ້າງ ແລະ ວັດທະນະທຳທີ່ກຳນົດວິທີການຕັດສິນໃຈຂອງເຂົາເຈົ້າເຊິ່ງລັດຖະສະພາມີບົດບາດສຳຄັນໃນການນຳພາການປ່ຽນແປງນີ້ ໂດຍການປັບປຸງກົດໝາຍ, ນະໂຍບາຍຕ່າງໆ ແລະ ນຳໃຊ້ກົນໄກການກວດກາໃຫ້ສອດຄ່ອງກັບຫຼັກການຂອງຄວາມສະເໝີພາບຍິງ-ຊາຍ...". ນອກນັ້ນ, ຍັງໄດ້ລາຍງານຄວາມຄືບໜ້າຂອງການຈັດຕັ້ງຜັນຂະຫຍາຍແຜນປະຕິບັດງານການສົ່ງເສີມການມີສ່ວນຮ່ວມທາງດ້ານການເມືອງ ແລະ ການເປັນຜູ້ນຳຂອງແມ່ຍິງຂອງ ສປປລາວ, ເຫັນວ່າພວກເຮົາໄດ້ສຸມໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ ສສຊ ເພດຍິງ ເພື່ອເພີ່ມຂີດຄວາມສາມາດໃນການປະຕິບັດໜ້າທີ່ສຳຄັນໃນຖານະທີ່ເປັນຕົວແທນຂອງປະຊາຊົນ; ພ້ອມນັ້ນ, ສະພາແຫ່ງຊາດຍັງໄດ້ດຳເນີນການເກັບກຳ ແລະ ວິເຄາະບົດບາດຍິງ-ຊາຍໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຂອງ ສປປລາວ ໃນປີ 2025, ຖືໄດ້ວ່າເປັນຄັ້ງທຳອິດໃນອາຊຽນ ແລະ ເປັນການສ້າງຄວາມຮັບຮູ້ໃຫ້ແກ່ສັງຄົມກ່ຽວກັບບົດບາດຂອງແມ່ຍິງໃນເວທີການເມືອງເຊິ່ງຜົນການວິເຄາະດັ່ງກ່າວໄດ້ສົ່ງຜົນເຮັດໃຫ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ໃນເດືອນກຸມພາຜ່ານມາ ມີ ສສຊ ເພດຍິງກວມເອົາ 29.71%.

ຜົນຂອງກອງປະຊຸມຄັ້ງນີ້ຈະຖືກນຳໄປພິຈາລະນາແລະຮັບຮອງໃນກອງປະຊຸມໄອປາ ຄັ້ງທີ 47 ເຊິ່ງຈະຈັດຂຶ້ນທີ່ປະເທດຟີລິບປິນ ໃນລະຫວ່າງວັນທີ 19-25 ຕຸລາ 2026.

**ຄະນະບັນນາທິການ**

ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**

ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ